ແນະນຳ ການສ້າງຄວາມສາມາດ ແລະ ການປຶກສາຫາລື

ການສະໜັບສະໜູນທົ່ວສັງຄົມ ໃນການທົບທວນ ຍຸດທະສາດ ແລະ ແຜນດຳເນີນງານ ດ້ານຊີວະນາໆພັນ (NBSAP)

ສັງລວມຈາກບົດຮຽນຂອງ ສປປ ລາວ
ສຳລັບ ກຸ່ມແມ່ຍິງ, ໄວໜຸ່ມ, ຊຸມຊົນ ແລະ ກຸ່ມຊົນເຜົ່າ



german cooperation
DEUTSCHE ZUSAMMENARBEIT

Co-funded by Norway

Implemented by giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

As part of NBSAP accelerator partnership

Produced by RDA

ບົດນຳ

ຍຸດທະສາດ ແລະ ແຜນດຳເນີນງານດ້ານຊີວະນາໆພັນແຫ່ງຊາດ (NBSAP) ແມ່ນກອບການຈັດຕັ້ງປະຕິບັດແຫ່ງຊາດຫຼັກໃນການອະນຸລັກ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ຕາມສົນທິສັນຍາວ່າດ້ວຍຄວາມຫຼາກຫຼາຍທາງຊີວະນາໆພັນ (CBD). CBD ແມ່ນສົນທິສັນຍາທີ່ສາກົນໄດ້ຮັບຮອງເອົາໃນປີ 1992 ເພື່ອປົກປ້ອງຄວາມຫຼາກຫຼາຍຂອງທຸກສິ່ງທີ່ມີຊີວິດໃນໂລກ ແລະ ສປປ ລາວ ໄດ້ກາຍເປັນພາຄີຂອງສົນທິສັນຍານີ້ໃນປີ 1996, ໄດ້ໃຫ້ຄຳໝັ້ນສັນຍາທີ່ຈະປະຕິບັດຢ່າງຈິງຈັງສຳລັບການປົກປັກຮັກສາຊີວະນາໆພັນ.

ສປປ ລາວ ໄດ້ພັດທະນາ NBSAP ມາແລ້ວ 2 ສະບັບ, ສະບັບທຳອິດໄດ້ກຳນົດແຜນດຳເນີນງານເຖິງປີ 2010 ແລະ ຍຸດທະສາດເຖິງປີ 2020, ພາຍໃຕ້ຄວາມຮັບຜິດຊອບຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕໍ່ມາໄດ້ຖືກປັບປຸງເປັນສະບັບທີສອງຂອງລາວ, ໂດຍມີແຜນດຳເນີນງານທີ່ຂະຫຍາຍໄປເຖິງ 2016 ແລະ ຍຸດທະສາດເຖິງ 2025. ໃນລະດັບສາກົນ, ໃນປີ 2022, ປະເທດທີ່ເປັນພາຄີໃນສົນທິສັນຍາຊີວະນາໆພັນ (CBD) ໄດ້ຮັບຮອງເອົາກອບວຽກສາກົນຊີວະນາໆພັນສະບັບໃຫມ່ ຄຸນມິງ-ມອນເທວ (GBF) ເປັນເຄື່ອງມືແນະນຳສຳລັບການປະສານງານ ການຈັດຕັ້ງປະຕິບັດໃນສາກົນ. ໃນຖານະທີ່ເປັນພາຄີຂອງ CBD, ສປປ ລາວ ມີຄວາມຮັບຜິດຊອບໃນການຈັດວາງຄວາມພະຍາຍາມແຫ່ງຊາດກັບເປົ້າໝາຍ GBF, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ເປັນອົງການຂອງລັດຖະບານທີ່ຮັບຜິດຊອບຍຸດທະສາດຊີວະນາໆພັນ, ໄດ້ວາງເປົ້າໝາຍປັບປຸງ, ວາງຍຸດທະສາດແຫ່ງຊາດ ແລະ ເປົ້າໝາຍການດຳເນີນງານ ໃຫ້ໄດ້ມາດຕະຖານລະດັບສາກົນ ໂດຍຜ່ານ NBSAP ສະບັບໃໝ່ແຕ່ປີ 2026 ຫາ 2030. ການບັນລຸເປົ້າໝາຍດັ່ງກ່າວໄດ້ຮຽກຮ້ອງໃຫ້ທົ່ວສັງຄົມ ມີທັດສະນະທີ່ຫຼາກຫຼາຍ, ນຳໃຊ້ນະວັດຕະກຳທີ່ສ້າງສັນ ແລະ ຮັບປະກັນການມີສ່ວນຮ່ວມຂອງສັງຄົມຢ່າງແທ້ຈິງ.

ການພັດທະນາຄູ່ມືສະບັບນີ້ແມ່ນໄດ້ມາຈາກການບັນທຶກບົດຮຽນຂອງກອງປະຊຸມປຶກສາຫາລືຮ່ວມກັບກຸ່ມ ຊາວໜຸ່ມ, ແມ່ຍິງ ແລະ ຊຸມຊົນຂົ້ນທ້ອງຖິ່ນ ແລະ ກຸ່ມຊົນເຜົ່າ ພ້ອມທັງໄດ້ຮັບການຮ່ວມມືດ້ານຄຳສະເໜີແນະຈາກອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງພາກສັງຄົມທີ່ສະໜັບສະໜູນການເຮັດວຽກຂອງລັດຖະບານລາວ. ການລວມເອົາຄວາມຫຼາກຫຼາຍ, ຄວາມເປັນຈິງໃນພື້ນທີ່ຈາກທົ່ວປະເທດເຂົ້າໃນການປັບປຸງ NBSAP ແມ່ນມີຄວາມໝາຍ ແລະ ເປັນການສ້າງໂອກາດຫຼາຍກວ່າເກົ່າສຳລັບການແລກປ່ຽນຄວາມຮູ້ ແລະ ການເຜີຍແຜ່ຢ່າງກວ້າງຂວາງ ເຊິ່ງມັນເປັນຄວາມພະຍາຍາມໃນການສະໜັບສະໜູນວຽກງານຊີວະນາໆພັນຂອງທີມງານພັດທະນາໃນຄັ້ງນີ້.

ຄູ່ມືແນະນຳການຝຶກອົບຮົມສະບັບນີ້ແມ່ນໄດ້ພັດທະນາຂຶ້ນບົນພື້ນຖານປະສົບການຈາກກິດຈະກຳສ້າງຂີດຄວາມສາມາດ ແລະ ປຶກສາຫາລືຫຼາຍຄັ້ງເຊັ່ນ: ການຈັດຝຶກອົບຮົມເຜີຍແຜ່ສົນທະນາກັບກຸ່ມ ໄວໜຸ່ມລາວ ໃນວັນທີ 25 ກໍລະກົດ 2024, ທີ່ນະຄອນຫຼວງວຽງຈັນ; ກັບອົງການທີ່ເຮັດວຽກໄວໜຸ່ມ ໃນວັນທີ 29-30 ຕຸລາ 2024; ແລະ ກັບກຸ່ມແມ່ຍິງ ໃນວັນທີ 27-28 ພະຈິກ 2024 ທີ່ນະຄອນຫລວງວຽງຈັນ. ກອງປະຊຸມຝຶກອົບຮົມ ແລະ ປຶກສາຫາລືໄດ້ຈັດຕື່ມອີກກັບກຸ່ມຊຸມຊົນ ແລະ ຊົນເຜົ່າ ໃນຕົ້ນປີ 2025 ຢູ່ 3 ແຫ່ງຄື: ເມືອງບໍ່ອລະພາ, ແຂວງຄຳມ່ວນ (19-20 ມີນາ 2025), ເມືອງໂຂງ, ແຂວງຈຳປາສັກ (ວັນທີ 25-26 ມີນາ 2025) ແລະ ເມືອງຊ້ອນ, ແຂວງຫົວພັນ (ວັນທີ 19-20 ເມສາ 2025). ກອງປະຊຸມເຫຼົ່ານີ້ໄດ້ໃຫ້ບົດຮຽນທີ່ມີຄ່າ ທີ່ຊ່ວຍໃນການພັດທະນາ ແລະ ອອກແບບຂອງຄູ່ມືສະບັບນີ້ໃຫ້ມີຄວາມສົມບູນຄົບຖ້ວນຂຶ້ນຕື່ມ.

ສູນພັດທະນາຊຸມຊົນ (RDA) ໄດ້ພັດທະນາຊຸດຝຶກອົບຮົມນີ້ດ້ວຍຄວາມຕັ້ງໃຈ, ໂດຍນຳໃຊ້ວິທີການຮຽນຮູ້ທີ່ເນັ້ນການລົງມືປະຕິບັດ ແລະ ດັດປັບເນື້ອໃນໃຫ້ເໝາະສົມກັບຄວາມຕ້ອງການຂອງຜູ້ເຂົ້າຮ່ວມແຕ່ລະກຸ່ມທີ່ມີຄວາມຫຼາກຫຼາຍ ໂດຍໄດ້ຮັບທຶນສະໜັບສະໜູນຈາກໂຄງການ GIZ Global ພາຍໃຕ້ໂຄງການ "ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດເປົ້າໝາຍຊີວະນາໆພັນສາກົນໃນລະດັບຊາດ (GBF Implementation)" ແລະ ໂຄງການ "ປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດປ່າໄມ້ ແລະ ຊີວະນາໆພັນແບບຍືນຍົງ" (ProFEB) ຕາງໜ້າໃຫ້ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາແຫ່ງສະຫະພັນ ເຢຍລະມັນ (BMZ) ສົມທົບທຶນໂດຍ ອົງການຮ່ວມມືເພື່ອການພັດທະນາຂອງປະເທດນອກແວ (NORAD) ແລະ ຈັດຕັ້ງປະຕິບັດໃນກອບແຜນງານການຮ່ວມມືເພື່ອຈັດຕັ້ງປະຕິບັດ NBSAP.

ເຖິງວ່າຄູ່ມືສະບັບນີ້ຈະໄດ້ມາຈາກບົດຮຽນຕົວຈິງ ແລະ ຖືວ່າເປັນການສັງລວມເອົາຂໍ້ການປະຕິບັດທີ່ດີທີ່ສຸດ, ແຕ່ບໍ່ມີເຄື່ອງມືໃດທີ່ສົມບູນແບບທຸກຢ່າງ ສະນັ້ນ, ຖ້າຫາກທ່ານໄດ້ອ່ານ ຫຼື ໄດ້ເອົາໄປ ທົດລອງຈັດຕັ້ງປະຕິບັດ ເມື່ອທ່ານເຫັນເຖິງຂໍ້ຄວນປັບປຸງໃດທີ່ເໝາະສົມ ທ່ານສາມາດມີຄຳເຫັນມາຫາພວກເຮົາໄດ້ຢ່າງສະດວກໃຈ ເພື່ອພວກເຮົາຈະໄດ້ເອົາໄປສືບຕໍ່ປັບປຸງ ໃນອະນາຄົດ.

ເປົ້າໝາຍລວມຂອງຄູ່ມື:

ຄູ່ມືສະບັບນີ້ ມີເປົ້າໝາຍ ເປັນບ່ອນອີງໃນການປະຕິບັດ ທີ່ເປັນປະໂຫຍດ ສຳລັບພາກລັດ, ຜູ້ໃຫ້ທຶນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (NGOs) ແລະ ພາກສ່ວນອື່ນໆ ທີ່ມີແຜນຈະສະໜັບສະໜູນ ຫຼື ເຊື່ອມສານການປົກສາຫາລືແບບມີສ່ວນຮ່ວມ ເຂົ້າໃນການພັດທະນາຍຸດທະສາດ ຫຼື ນະໂຍບາຍແຫ່ງຊາດວ່າດ້ວຍການອະນຸລັກຊີວະນາໆພັນ. ເຖິງແມ່ນວ່າຄູ່ມືນີ້ຈະເປັນຕົວຢ່າງຂອງການນຳໃຊ້ເປັນບ່ອນອີງ ເຂົ້າໃນຂະບວນການທົບທວນ NBSAP ຂອງ ສປປ ລາວ ກໍຕາມ ແຕ່ວິທີການ, ເຄື່ອງມື ແລະ ຂັ້ນຕອນແມ່ນ ສາມາດປັບໃຊ້ໄດ້ຢ່າງກວ້າງຂວາງຂອງແຕ່ລະບໍລິບົດທ້ອງຖິ່ນ ແລະ ປະເທດອື່ນໆ. ຄູ່ມືນີ້ຍັງສົ່ງເສີມວິທີການທີ່ສ້າງສັນ ແລະ ມີສ່ວນຮ່ວມ ໃນການສ້າງຈິດສຳນຶກ ກ່ຽວກັບ ອານຸສັນຍາວ່າດ້ວຍຄວາມຫຼາກຫຼາຍທາງຊີວະນາໆພັນ (CBD), ກອບວຽກສາກົນຊີວະນາໆພັນສະບັບໃຫມ່ ຄຸນມິງ-ມອນເທວ (KM-GBF) ແລະ NBSAPs. ນອກຈາກນັ້ນ ຄູ່ມືນີ້ຍັງມີເປົ້າໝາຍເພື່ອເສີມສ້າງ ຂະບວນການ ການວາງແຜນແບບມີສ່ວນຮ່ວມ ແລະ ມີຄວາມຫຼາກຫຼາຍ ໂດຍທີ່ຜູ້ອຳນວຍຄວາມສະດວກໃນການຈັດຝຶກອົບຮົມມີ ເຄື່ອງມື ແລະ ວິທີການທີ່ສາມາດປະຕິບັດຕົວຈິງໄດ້ ໃນຮູບແບບການມີສ່ວນຮ່ວມຂອງແມ່ຍິງ, ໄວໜຸ່ມ, ຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າ. ດ້ວຍວິທີການນີ້ ມັນຈະຊ່ວຍໃນການສົ່ງເສີມການມີສ່ວນຮ່ວມທີ່ມີເນື້ອໃນ ໃນວຽກງານດ້ານຊີວະນາໆພັນ ແລະ ໃນການພັດທະນາ, ຊຸກຍູ້ນະໂຍບາຍແບບກວ້າງຂວາງຂຶ້ນຕື່ມ, ຄູ່ມືນີ້ເປັນເອກະສານອ້າງອີງທີ່ມີຄຸນຄ່າ ບໍ່ພຽງແຕ່ສຳລັບກຸ່ມເຮັດວຽກທີ່ກ່ຽວຂ້ອງພາຍໃນ ສປປ ລາວ ແຕ່ຍັງສຳລັບປະເທດອື່ນໆ ທີ່ມີຈຸດປະສົງນຳໃຊ້ແນວທາງທີ່ມີສ່ວນຮ່ວມ ແລະ ຫຼາກຫຼາຍໃນຮູບແບບທີ່ຄ້າຍຄືກັນ.

ກຸ່ມເປົ້າໝາຍ:

ຄູ່ມືສະບັບນີ້ໄດ້ຖືກແບ່ງອອກເປັນ 2 ພາກ ຢ່າງຕັ້ງໃຈ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການສະເພາະຂອງແຕ່ລະກຸ່ມ: ພາກທີ 1 ເນັ້ນໃສ່ກຸ່ມໄວໜຸ່ມ ແລະ ແມ່ຍິງ ທີ່ໃຫ້ພວກເຂົາໄດ້ເຫັນເຖິງບົດບາດ ແລະ ທັດສະນະຂອງພວກເຂົາໃນວຽກອະນຸລັກຊີວະນາໆພັນ; ພາກທີ 2 ອອກແບບເພື່ອກຸ່ມຊົນເຜົ່າ ແລະ ຊຸມຊົນທ້ອງຖິ່ນໂດຍເນັ້ນໃຫ້ເຂົາເຈົ້າເຂົ້າໃຈຕໍ່ຄວາມຮູ້ດ້ານພູມປັນຍາທ້ອງຖິ່ນ ແລະ ຄວາມຜູກພັນກັບຜືນແຜ່ນດິນທີ່ມີຄ່າ.

ຫຼັກການສຳລັບຜູ້ອຳນວຍຄວາມສະດວກ:

ສຳລັບຜູ້ທີ່ຈະດຳເນີນການຝຶກອົບຮົມນີ້ ພວກເຮົາທີມງານຜູ້ອອກແບບຢາກຂໍຝາກບາງຫຼັກການທີ່ສຳຄັນໄວ້ໃຫ້ເພື່ອເປັນຂໍ້ຄວນຄຳນຶງ ໃນເວລາອຳນວຍຄວາມສະດວກໃຫ້ມີປະສິດທິພາບດັ່ງນີ້:

- ຄວນສຶກສາເນື້ອໃນຂອງສົນທິສັນຍາວ່າດ້ວຍຊີວະນາໆພັນ, ກອບວຽກສາກົນຊີວະນາໆພັນ ຄຸນມິງ-ມອນເທວ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ ໃຫ້ມີຄວາມເຂົ້າໃຈໃນເບື້ອງຕົ້ນຕໍ່ກັບ ກົນໄກການເຮັດວຽກ ແລະ ອື່ນໆທີ່ອາດຈະເປັນຈຸດສຸມຂອງແຕ່ລະຊຸດອົບຮົມທີ່ອາດຈະແຕກຕ່າງກັນ.
- ການເປີດກວ້າງ ແລະ ໃຫ້ເວລາກັບຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນຢ່າງສ້າງສັນ ແມ່ນຫົວໃຈຂອງການເຜີຍແຜ່ແບບມີສ່ວນຮ່ວມ.
- ການປະເມີນຄວາມຮັບຮູ້ຂອງຜູ້ເຂົ້າຮ່ວມ ແມ່ນມີລັກສະນະເຈາະຈົງທີ່ຜູ້ເຂົ້າຮ່ວມຄວນໄດ້ຮັບການເຄົາລົບບໍ່ວ່າຜົນຈະອອກມາໃນຮູບແບບໃດໃນກ່ອນ ແລະ ຫຼັງ ການຝຶກອົບຮົມ.
- ການໃຫ້ຄວາມເທົ່າທຽມກັນຂອງບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍຂອງຜູ້ເຂົ້າຮ່ວມແມ່ນຈຸດແຂງທີ່ຜູ້ດຳເນີນຄວນຍຶດຖືເອົາເປັນໃຈກາງໃນການດຳເນີນການຝຶກອົບຮົມຕະຫຼອດເວລາ.
- ກິດຈະກຳ ຫຼື ຮູບແບບການຮຽນຮູ້ໃນຄູ່ມືນີ້ແມ່ນບໍ່ໃຫ້ຖືເປັນທິດສະດີແບບຕາຍໂຕ ແຕ່ຄວນຖືເປັນແນວທາງທີ່ສາມາດປັບແກ້ໄດ້ຕາມຄວາມເໝາະສົມ ແລະ ຕາມສະພາບຄວາມເປັນຈິງຂອງແຕ່ລະຊຸດການຝຶກອົບຮົມ.

ສາລະບານ

ສຳລັບກຸ່ມແມ່ຍິງ ແລະ ໄວໜຸ່ມ

ບົດຮຽນທີ 01..... 1

ແນະນຳຕົວເອງ.

ບົດຮຽນທີ 02..... 2

ພວກເຮົາຮູ້ຫຍັງແດ່? (ປະເມີນກ່ອນການຝຶກ).

ບົດຮຽນທີ 03..... 3

ຄວາມເຂົ້າໃຈພື້ນຖານກ່ຽວກັບຊີວະນາໆພັນ ແລະ ຄວາມສ່ຽງຕໍ່ການສູນພັນ.

ບົດຮຽນທີ 04..... 5

ສົນທິສັນຍາວ່າດ້ວຍຊີວະນາໆພັນ (CBD) ແລະ ບັນດາສັນຍາທີ່ຕິດພັນ.

ບົດຮຽນທີ 05..... 6

ຄວາມຮູ້ພື້ນຖານກ່ຽວກັບ ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ (KM-GBF).

ບົດຮຽນທີ 06..... 8

ຍຸດທະສາດ ແລະ ແຜນດຳເນີນງານ ຊີວະນາໆພັນແຫ່ງຊາດ (NBSAP).

ບົດຮຽນທີ 07..... 9

ບົດບາດຂອງເຈົ້າໃນວຽກງານອະນຸລັກຊີວະນາໆພັນ

ບົດຮຽນທີ 08..... 11

ພວກເຮົາໄດ້ຮຽນຮູ້ຫຍັງຫຍັງແດ່(ປະເມີນຫຼັງການຝຶກ).

ບົດຮຽນເພີ່ມຕື່ມ..... 11

ການສຳຫຼວດຂໍ້ມູນຄວາມເຂົ້າໃຈຂອງ ກຸ່ມໄວໜຸ່ມຕໍ່ກັບວຽກງານຊີວະນາໆພັນຂອງລາວ ແບບອອນລາຍ.

ສຳລັບກຸ່ມຊຸມຊົນ ແລະ ຊົນເຜົ່າ

ບົດຮຽນທີ 01..... 13

ແນະນຳຕົວເອງ.

ບົດຮຽນທີ 02..... 14

ຄວາມເຂົ້າໃຈພື້ນຖານກ່ຽວກັບຊີວະນາໆພັນ,ຊັບພະຍາກອນທຳມະຊາດ ແລະ ຄວາມສ່ຽງ.

ບົດຮຽນທີ 03..... 16

ສົນທິສັນຍາວ່າດ້ວຍຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ.

ບົດຮຽນທີ 04..... 17

ພູມປັນຍາທ້ອງຖິ່ນ ແລະ ວິໄສທັດຂອງຊຸມຊົນ.

ບົດຮຽນທີ 05..... 18

ສິດ ແລະ ການມີສ່ວນຮ່ວມຂອງຊຸມຊົນ ແລະ ຊົນເຜົ່າໃນການອະນຸລັກຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ.

ບົດຮຽນທີ 06..... 20

ການປົກສາຫາລືຂອງຊຸມຊົນ ແລະ ຊົນເຜົ່າຕໍ່ກັບການປະກອບສ່ວນໃນວຽກງານຊີວະນາໆພັນຂອງທ້ອງຖິ່ນ ແລະ ແຫ່ງຊາດ.

ບົດຮຽນທີ 07..... 21

ປະເມີນການຮັບຮູ້ຕໍ່ກັບບົດຮຽນຂອງ ການຝຶກອົບຮົມ (ປະເມີນຫຼັງການຝຶກ).



ເອກກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 01..... 24
ໄພສເຕ ນິຍາມ ແລະ ປັດໃຈສູ່ງຂອງຊີວະນາໆພັນ.

ເອກະສານຊ້ອນທ້າຍ 02..... 25
ຊຸດເກມ ການຂຶ້ນຂອງ CBD.

ເອກະສານຊ້ອນທ້າຍ 03..... 26
ໄພສເຕ ການເກີດຂຶ້ນຂອງ CBD ໃນສາກົນ.

ເອກະສານຊ້ອນທ້າຍ 04..... 27
ໄພສເຕ ການເກີດຂຶ້ນຂອງ CBD ໃນລາວ.

ເອກະສານຊ້ອນທ້າຍ 05..... 28
ໄພສເຕຂໍ້ມູນທົ່ວໄປຂອງ ສົນທິສັນຍາຊີວະນາໆພັນ CBD.

ເອກະສານຊ້ອນທ້າຍ 06..... 29
ໄພສເຕ ກົນໄກການເຮັດວຽກຂອງ CBD ໃນສາກົນ.

ເອກະສານຊ້ອນທ້າຍ 07..... 30
ໄພສເຕ ກົນໄກການປະສານງານ ຂອງບັນດາສົນທິສັນຍາທີ່ກ່ຽວພັນກັບ CBD

ເອກະສານຊ້ອນທ້າຍ 08..... 31
ໄພສເຕ ກອບວຽກຊີວະນາໆພັນສາກົນ

ເອກະສານຊ້ອນທ້າຍ 09..... 32
ເຈ້ຍບັດຄຳ ພິມແຕ່ລະຂໍ້ຂອງ 23 ເປົ້າໝາຍກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທອ.

ເອກະສານຊ້ອນທ້າຍ 10..... 33
ໄພສເຕ ຂໍ້ມູນທົ່ວໄປຂອງ NBSAPs ໃນ ສປປ ລາວ.

ເອກະສານຊ້ອນທ້າຍ 11..... 34
5 ຂໍ້ສຳຄັນຂອງຍຸດທະສາດ ແລະ ແຜນດຳເນີນງານ 2016-2025.

ເອກະສານຊ້ອນທ້າຍ 12..... 35
ຂໍ້ແນະນຳຂະບວນການ World Cafe.

ເອກະສານຊ້ອນທ້າຍ 13..... 36
ພິມເຈ້ຍ A4 ຮ່າງເປົ້າໝາຍດ້ານຊີວະນາໆພັນ 2030 ຂອງ ສປປ ລາວ.


ເອກະສານຊ້ອນທ້າຍ 14..... 37
ຕົວຢ່າງຕາຕະລາງຄົ້ນຄວ້າແຜນດຳເນີນງານ.

ເອກະສານຊ້ອນທ້າຍ 15..... 38
ແບບສອບຖາມອອນລາຍຂອງກຸ່ມໄວໜຸ່ມ.

ເອກະສານຊ້ອນທ້າຍ 16..... 39
ແບບຟອມປະເມີນຜົ້ງການຝຶກ.



ສຳລັບກຸ່ມແມ່ຍິງ ແລະ ໄວໜຸ່ມ



ບົດຮຽນທີ 01.

ແນະນຳຕົວເອງ

ຈຸດປະສົງ:

ເພື່ອໃຫ້ຜູ້ເຂົ້າຮ່ວມ ແລະ ທີມງານຄູຝຶກໄດ້ຮູ້ຈັກກັນຜ່ານການສົນທະນາໃນກຸ່ມ ໃນຂະນະທີ່ເຊີນຊວນໃຫ້ຜູ້ເຂົ້າຮ່ວມໄດ້ທົບທວນຄືນ ແລະ ຍິນດີກັບສາຍສຳພັນ ຂອງຕົວເອງກັບຄວາມຫຼາກຫຼາຍຂອງຊີວະນາໆພັນ.

ເນື້ອໃນ:


- ການສ້າງສະມາທິຜ່ານສຽງດົນຕີ.
- ການປະກອບສ່ວນຂອງເຮົາຕໍ່ກັບລະບົບນິເວດຊີວະນາໆພັນ.

ວິທີການ:

ຄູຝຶກໃຫ້ຜູ້ເຂົ້າຮ່ວມນັ່ງສະມາທິໂດຍໃຫ້ຟັງສຽງດົນຕີປະກອບ (ດົນຕີປະກອບສຽງນົກ, ສຽງນ້ຳໄຫຼ ຫຼື ສຽງຝົນຕົກ) 2 ນາທີ ຫຼັງຈາກນັ້ນໃຫ້ຜູ້ເຂົ້າຮ່ວມຢືນເປັນວົງມົນແລ້ວໃຫ້ແຕ່ລະຄົນແນະນຳຕົວເອງໂດຍໃຫ້ບອກຊື່, ຊື່ຫຼິ້ນ ຫຼື ຊື່ເຕັມກໍ່ໄດ້ ແລ້ວ ເວົ້າຕໍ່ອີກວ່າ ປຽບໂຕເອງເປັນຫຍັງໃນຊີວະນາໆພັນຂອງໂລກນີ້ ຕົວຢ່າງ: ຈັນທະລັງສີ ປຽບເໝືອນ ເຜິ້ງໃນປ່າດົງດິບ, ຄູຝຶກ ຈະເຕືອນຜູ້ເຂົ້າຮ່ວມທຸກຄົນໃຫ້ຈື່ສິ່ງທີ່ຕົນເອງປຽບເໝືອນ ແລະ ຈື່ຂອງໝູ່ໃຫ້ດີເພື່ອຈະໃຫ້ ຈັບກຸ່ມສົນທະນາກັນ. ເມື່ອທຸກຄົນໄດ້ແນະນຳຄົບແລ້ວ ໃຫ້ຈັບກຸ່ມສົນທະນາກັນ ກຸ່ມໜຶ່ງ 2-4 ຄົນ. ເມື່ອໄດ້ກຸ່ມແລ້ວໃຫ້ແລກປ່ຽນກັນໃນກຸ່ມວ່າ ຍ້ອນຫຍັງຈຶ່ງປຽບໂຕເອງເປັນສິ່ງນັ້ນ, ມັນມີຄວາມສຳຄັນຕໍ່ລະບົບນິເວດຊີວະນາໆພັນແບບໃດ? ຄູຝຶກໃຫ້ເວລາລົມກັນໃນກຸ່ມ 5 ນາທີ.

ອຸປະກອນ:


- ສຽງດົນຕີປະກອບການນັ່ງສະມາທິ.



- ເຈ້ຍແຜ່ນໃຫຍ່ຂຽນຕົວຢ່າງການປຽບເໝືອນ ແລະ ຂຽນຄຳຖາມສົນທະນາກຸ່ມຍ່ອຍ.



ເວລາ: 15 ນາທີ



ບົດຮຽນທີ 02. ປະເມີນການຮັບຮູ້ຕໍ່ກັບສົນທິສັນຍາຊີວະນາໆພັນ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ (ກ່ອນການຝຶກ)

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ປະເມີນການຮັບຮູ້ຂອງຕົວເອງຕໍ່ກັບສົນທິສັນຍາຊີວະນາໆພັນ (CBD). ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ (NBSAP). ກອບວຽກຊີວະນາໆພັນສາກົນ (GBF) ກ່ອນການເລີ່ມຝຶກອົບຮົມ.

ເນື້ອໃນ:

- ການຈັດລະດັບຄວາມຮັບຮູ້ຂອງຕົວເອງຕໍ່ກັບຍຸດທະສາດຊີວະນາໆພັນແຫ່ງຊາດ ຈົນເຖິງສົນທິສັນຍາຊີວະນາໆພັນສາກົນ.

ວິທີການ:

ຄູຝຶກໃຊ້ເຊືອກຟາງ ຫຼື ສະກ໊ອດເຈ້ຍ ໝາຍສັນຍາລັກຮູບມືທັງ 5 ນິ້ວ ທີ່ມີຂະໜາດໃຫຍ່ ສາມາດໃຫ້ຄົນເຂົ້າໄປຢືນຢູ່ໃນມືແຕ່ລະນິ້ວໄດ້ ໂດຍແຕ້ມໃສ່ບໍລິເວນພື້ນຂອງຫ້ອງປະຊຸມ. ຈາກນັ້ນແນະນຳຜູ້ເຂົ້າຮ່ວມວ່າ: ໃຫ້ແຕ່ລະຄົນປະເມີນຄວາມຮັບຮູ້ຂອງຕົນເອງກ່ຽວກັບ ສົນທິສັນຍາຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນ ແລະ ຍຸດທະສາດຊີວະນາໆພັນ ແຫ່ງຊາດ ໂດຍເຮັດເປັນ 3 ຮອບ ໃນ 3 ຫົວຂໍ້ ແລ້ວໃຫ້ຜູ້ເຂົ້າຮ່ວມເລືອກເຂົ້າໄປຢືນຢູ່ໃນ ນິ້ວມື 5 ນິ້ວທີ່ທີມງານຄູຝຶກໄດ້ໝາຍສັນຍາລັກຂຶ້ນມາ.

ນິ້ວມື 5 ນິ້ວ ຕາມລະດັບຄວາມຮັບຮູ້ຂອງຕົນເອງດັ່ງນີ້:


1. ນິ້ວກ້ອຍ: ບໍ່ຮູ້ ແລະ ບໍ່ເຄີຍໄດ້ຍິນມາກ່ອນ.
2. ນິ້ວນາງ: ຮູ້ ແຕ່ ບໍ່ຮູ້ວ່າມີເນື້ອໃນແບບໃດ.
3. ນິ້ວກາງ: ຮູ້ ແລະ ພໍຮູ້ຈັກວ່າມີເນື້ອໃນແບບໃດ.
4. ນິ້ວຊີ້: ຮູ້ດີ ແລະ ໄດ້ສຶກສາ ຄົ້ນຄ້ວ້ຜ່ານເອກະສານມາກ່ອນ.
5. ນິ້ວໂປ້: ຮູ້ດີ ແລະ ສາມາດແນະນຳຜູ້ອື່ນໄດ້.

- ພາຍຫຼັງທີ່ຜູ້ເຂົ້າຮ່ວມເລືອກຢືນຢູ່ນິ້ວມືແຕ່ລະນິ້ວແລ້ວ ຄູຝຶກ ຕັ້ງຄຳຖາມ ຖາມຜູ້ເຂົ້າຮ່ວມ ອາດຈະເລືອກເອົາບາງຄົນຕອບໂດຍໃຫ້ຕາງໜ້າແຕ່ລະນິ້ວມືໃຫ້ເຫດຜົນວ່າເປັນຫຍັງຕົນເອງຈຶ່ງເລືອກຢືນຢູ່ນິ້ວນັ້ນ.
- ຄູຝຶກບັນທຶກຜົນການປະເມີນກ່ອນການຝຶກອົບຮົມເກັບໄວ້ ຫຼື ອາດຈະຖ່າຍຮູບເກັບໄວ້.

-

ອຸປະກອນ:


- ເຊືອກຟາງ.



- ສະກ໊ອດເຈ້ຍ.



ເວລາ: 15 ນາທີ



ບົດຮຽນທີ 03.

ຄວາມເຂົ້າໃຈພື້ນຖານກ່ຽວກັບຊີວະນາໆພັນ ແລະ ຄວາມສ່ຽງຕໍ່ການສູນພັນ

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມເຂົ້າໃຈພື້ນຖານຄວາມຮູ້ດ້ານຊີວະນາໆພັນ ແລະ ປັດໃຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການສູນພັນຂອງຊີວະນາໆ ພັນ.


ເນື້ອໃນ:

- ນິຍາມ ແລະ ຄວາມສຳຄັນຂອງຊີວະນາໆພັນຕໍ່ກັບການດຳລົງຊີວິດຂອງມະນຸດ.
- ປັດໃຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການສູນພັນຂອງຊີວະນາໆພັນ.

ນິຍາມ ແລະ ຄວາມສຳຄັນຂອງຊີວະນາໆພັນຕໍ່ກັບການດຳລົງຊີວິດຂອງມະນຸດ:

ຊີວະນາໆພັນແມ່ນຫຍໍ້ມາຈາກ ຄວາມຫຼາກຫຼາຍທາງຊີວະພາບ ເຊິ່ງໝາຍເຖິງຄວາມຫຼາກຫຼາຍຂອງຊະນິດພັນທີ່ມີຊີວິດທີ່ມີການປັບປ່ຽນໄດ້ຈາກການອັດແທກທີ່ແຕກຕ່າງກັນເຊັ່ນ: ຄວາມຫຼາກຫຼາຍທາງພັນທຸກຳ, ຄວາມຫຼາກຫຼາຍທາງຊະນິດພັນ ແລະ ຄວາມຫຼາກຫຼາຍທາງລະບົບນິເວດ.

ຄວາມຫຼາກຫຼາຍທາງຊີວະນາໆພັນ ເປັນຕົວຊີ້ວັດຄຸນນະພາບຂອງການດຳລົງຊີວິດຢູ່ຂອງມະນຸດໄດ້ຢ່າງຈະແຈ້ງ ຕົວຢ່າງ: ການເຮັດກະສິກຳແບບຍືນຍົງ. ເຜິ້ງເປັນພາຫະນະໃນການປະສົມເກສອນຂອງພືດໄດ້ຢ່າງມີປະສິດທິພາບຫຼາຍ ເຊັ່ນ ດຽວກັບ ຂີ້ກະເດືອນ ທີ່ຊ່ວຍໃນການປັບປຸງຄຸນນະພາບຂອງດິນ ປູກຝັງລວມທັງ ເຈຍ ທີ່ຊ່ວຍເປັນຜູ້ຄວບຄຸມປະຊາກອນຂອງຍຸງ ໃຫ້ມີຄວາມສົມດຸນ.



ປັດໃຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການສູນພັນຂອງຊີວະນາໆພັນ

ລະບົບນິເວດທີ່ປະກອບດ້ວຍຊຸມຊົນຂອງສັດ, ພືດ, ຈຸລິນຊີ, ອົງປະກອບທີ່ບໍ່ມີຊີວິດ, ແລະສະພາບແວດລ້ອມຮ່ວມກັນຂອງພວກມັນ, ສາມາດຖືກທຳລາຍໄດ້ໂດຍກິດຈະກຳຂອງມະນຸດ, ໄພພິບັດທາງທຳມະຊາດ, ຫຼື ການປ່ຽນແປງສະພາບດິນຟ້າອາກາດ.


ວິທີການ:

ຄູຝຶກນຳພາຜູ້ເຂົ້າຮ່ວມຫຼິ້ນເກມ ວິວັດທະນາການ ໂດຍໃຫ້ຜູ້ເຂົ້າຮ່ວມຢືນເປັນວົງມົນໃຫຍ່ ເພື່ອຟັງຄຳອະທິບາຍ.

ວິທີຫຼິ້ນເກມ: ວິວັດທະນາການ

- ໃນຮອບທຳອິດຂອງການຫຼິ້ນແມ່ນໃຫ້ທຸກຄົນເປັນເຜິ້ງພ້ອມດ້ວຍເຮັດທ່າປະກອບ ແລ້ວໃຫ້ຫາຄູ່ຕີຊຸ້ມ(ເຫີນ-ເຈັຍ-ມົດຕົ້ດ) ຜູ້ທີ່ຊະນະແມ່ນຈະກາຍເປັນໂຕເຈຍ ພ້ອມດ້ວຍເຮັດທ່າປະກອບ ແລ້ວຫາຄູ່ໃໝ່ທີ່ມີສາຍພັນດຽວກັນ .
- ຜູ້ຊະນະແມ່ນຈະກາຍເປັນສາຍພັນໃໝ່.
- ຜູ້ແພ້ແມ່ນຈະຍັງຄົງເປັນສາຍພັນເກົ່າ.
- ການພັດທະນາຂອງສາຍພັນແມ່ນຈາກ ເຜິ້ງ - ເຈຍ - ກົບ - ລີງ - ມະນຸດ.
- ຜູ້ຊະນະຮອບສຸດທ້າຍແມ່ນຈະກາຍເປັນມະນຸດ ແລ້ວໃຫ້ໄປຢືນນອກວົງມົນ ຢືນຖ້າຈົນກວ່າທຸກຄົນຫຼິ້ນແລ້ວ ສຸດທ້າຍແມ່ນຈະຍັງເຫຼືອ ສັດສາຍພັນລະໂຕ.

- ເມື່ອຫຼິ້ນເກມສຳເລັດແລ້ວຜູ້ເຂົ້າຮ່ວມສະຫຼຸບເກມໂດຍການຕັ້ງຄຳຖາມກັບຜູ້ທີ່ຍັງເຫຼືອວ່າ



ຮູ້ສຶກແນວໃດທີ່ໂຕເອງບໍ່ສາມາດກາຍພັນເປັນມະນຸດໄດ້? ແລະ ຖາມຜູ້ທີ່ກາຍເປັນມະນຸດຮູ້ສຶກແນວໃດເຊັ່ນກັນ?

- ການສະທ້ອນຄຳຖາມເຫຼົ່ານີ້ແມ່ນຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ລະນຶກເຖິງການເຊື່ອມສານກັນຂອງເກມ ແລະ ຊີວິດຕົວຈິງທີ່ບັນດາຊະນິດພັນມີຊີວິດຢູ່ລອດ ຫຼື ສູນພັນບໍ່ໄດ້ຟຸ້ງແຕ່ຂຶ້ນກັບວ່າໃຜເປັນຜູ້ແຂງແຮງກວ່າ ແຕ່ມັນຍ້ອນປັດໃຈພາຍນອກທີ່ກະທົບໃສ່ໃນຫຼາຍຄັ້ງແມ່ນເກີນກວ່າການຄວບຄຸມຂອງຊະນິດພັນນັ້ນໆເອງ.
- ຈາກນັ້ນຜູ້ອຳນວຍຄວາມສະດວກນຳພາການສົນທະນາສຸດທ້າຍກັບບົດຮຽນທີ່ສຳຄັນ: ເມື່ອປະຊາກອນມະນຸດເພີ່ມຂຶ້ນ ແລະ ກິດຈະກຳຂອງພວກເຮົາຂະຫຍາຍອອກໄປ, ຫຼາຍໆຊະນິດພັນເຊັ່ນ: ສັດ, ພືດ ແລະ ອື່ນໆ ປະເຊີນກັບໄພຂົ່ມຂູ່ທີ່ເພີ່ມຂຶ້ນເຊັ່ນ: ການສູນເສຍທີ່ຢູ່ອາໄສ, ມົນລະພິດ, ແລະການປ່ຽນແປງສະພາບຂອງດິນຟ້າອາກາດ. ຄວາມກົດດັນເຫຼົ່ານີ້ສາມາດນຳໄປສູ່ການສູນພັນ, ມັນບໍ່ແມ່ນຍ້ອນຊະນິດພັນໂຕໃດທີ່ອ່ອນແອກວ່າ, ແຕ່ມັນຍ້ອນວ່າເງື່ອນໄຂທີ່ຢູ່ອ້ອມຂ້າງພວກມັນປ່ຽນແປງໄວເກີນໄປ ຫຼື ຍ້ອນສະພາບທີ່ບໍ່ສົມດຸນ ກໍ່ເຊັ່ນດຽວກັນກັບບົດຮຽນໃນເກມ.
- ເພື່ອສະຫຼຸບ, ຄູຝຶກໄດ້ສະເໜີຄຳນິຍາມຂອງຊີວະນາໆພັນ, ອະທິບາຍເຖິງຄວາມສຳຄັນຂອງມັນຕໍ່ການເປັນຢູ່ທີ່ດີຂອງມະນຸດ ແລະ ອະທິບາຍເຖິງປັດໃຈຫຼັກທີ່ພາໃຫ້ມີຄວາມສ່ຽງຕໍ່ການສູນພັນ (ເບິ່ງເອກະສານຊ້ອນທ້າຍ 01).

ອຸປະກອນ:

- ເອກະສານຊ້ອນທ້າຍ 01: ໂພສເຕີ ນິຍາມ ແລະ ປັດໃຈສ່ຽງຂອງຊີວະນາໆພັນ.



- ແຜ່ນເຈ້ຍບອກໂຈດ ແລະ ວິທີການຫຼິ້ນເກມ ວິວັດທະນາການ.



- ລະຄັງ.



ເວລາ: 30 ນາທີ

ບົດຮຽນທີ 04. ສົນທິສັນຍາວ່າດ້ວຍຊີວະນາໆພັນ (CBD) ແລະ ສົນທິສັນຍາທີ່ຕິດພັນ

ຈຸດປະສົງ:


ໃຫ້ຜູ້ເຂົ້າຮ່ວມໄດ້ຮຽນຮູ້ບັນດາສົນທິສັນຍາທີ່ກ່ຽວພັນກັບຊີວະນາໆພັນທີ່ ສປປ ລາວ ໄດ້ລົງນາມຮັບຮອງ ແລະ ຮ່ວມເປັນພາຄີໃນການຈັດຕັ້ງປະຕິບັດ.

ເນື້ອໃນ:

- ຄວາມໝາຍ ແລະ ຈຸດປະສົງຂອງສົນທິສັນຍາຊີວະນາໆພັນ.
- ອານຸສັນຍາພາຍໃຕ້ ສົນທິສັນຍາຊີວະນາໆພັນ.
- ການເກີດຂຶ້ນຂອງສົນທິສັນຍາຊີວະນາໆພັນ
- ກົນໄກການເຮັດວຽກຂອງສົນທິສັນຍາຊີວະນາໆພັນໃນລາວ.
- ສົນທິສັນຍາທີ່ຕິດພັນກັບສົນທິສັນຍາວ່າດ້ວຍຊີວະນາໆພັນ.

ວິທີການ:

- ເກມ ການເກີດຂຶ້ນຂອງ CBD: ຄູຝຶກຈະມີບັດຄຳທີ່ສະແດງໃຫ້ເຫັນເຫດການຕ່າງໆທີ່ເກີດຂຶ້ນໃນລະຫວ່າງການສ້າງຕັ້ງ ແລະ ການພັດທະນາຂອງສົນທິສັນຍາຊີວະນາໆພັນ (CBD) ລະຫວ່າງ 1987 ແລະ 1996. ຜູ້ເຂົ້າຮ່ວມຈະແບ່ງອອກເປັນສອງກຸ່ມ ແລະ ຈະແຂ່ງຂັນກັນຕອບຂໍ້ຄວາມເພື່ອໃຫ້ກົງກັນກັບແຕ່ລະກິດຈະກຳກັບປີທີ່ສອດຄ່ອງກັນ. ແຕ່ລະກຸ່ມຈະມີເວລາ 15 ນາທີເພື່ອປຶກສາຫາລື ແລະ ຕັດສິນໃຈວາງຂໍ້ຄວາມໃຫ້ຖືກກັບກຳນົດເວລາຂອງແຕ່ລະເຫດການ.
- ນຳສະເໜີໂພສເຕີ CBD: ຫຼັງຈາກຮຽນຮູ້ກ່ຽວກັບຂະບວນການ CBD ທັງໃນລະດັບສາກົນ ແລະ ລາວ. ຄູຝຶກຈະນຳສະເໜີພາບລວມຂອງສົນທິສັນຍາວ່າດ້ວຍຊີວະນາໆພັນ ເຊິ່ງລວມມີ ມີໂພສເຕີຂໍ້ມູນ CBD ທີ່ກວມເອົາຄວາມໝາຍ ແລະ ຈຸດປະສົງຂອງສົນທິສັນຍາ, ອານຸສັນຍາທີ່ກ່ຽວຂ້ອງຂອງມັນ, ສົນທິສັນຍາອື່ນໆທີ່ເຊື່ອມຕໍ່ກັບ CBD, ແລະ ກົນໄກການເຮັດວຽກຂອງ CBD ໃນລະດັບສາກົນ ແລະ ພາຍໃນ ສປປ ລາວ.



ອຸປະກອນ:

- ເອກະສານຊ້ອນທ້າຍ 02: ຊຸດເກມ ການຂຶ້ນຂອງ CBD.



- ເອກະສານຊ້ອນທ້າຍ 03: ໂພສເຕີ ການເກີດຂຶ້ນຂອງ CBD ໃນສາກົນ.



- ເອກະສານຊ້ອນທ້າຍ 04: ໂພສເຕີ ການເກີດຂຶ້ນຂອງ CBD ໃນລາວ.



- ເອກະສານຊ້ອນທ້າຍ 05: ໂພສເຕີຂໍ້ມູນທົ່ວໄປຂອງ ສົນທິສັນຍາຊີວະນາໆພັນ CBD.



- ເອກະສານຊ້ອນທ້າຍ 06: ໂພສເຕີ ກົນໄກ ການເຮັດວຽກຂອງ CBD ໃນສາກົນ.



- ເອກະສານຊ້ອນທ້າຍ 07: ໂພສເຕີ ກົນໄກ ການປະສານງານ ຂອງບັນດາສົນທິສັນຍາທີ່ກ່ຽວພັນກັບ CBD ໃນ ສປປ ລາວ.



ເວລາ: 45 ນາທີ

ບົດຮຽນທີ 05. ຄວາມຮູ້ພື້ນຖານກ່ຽວກັບ ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ (KM-GBF)

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ ເພື່ອເປັນຂໍ້ມູນໃນການປະກອບສ່ວນເຂົ້າໃນການປັບປຸງຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດຕໍ່ໄປ.

ເນື້ອໃນ:

- ກອບວຽກຊີວະນາໆພັນສາກົນແມ່ນຫຍັງ ?
- ຂໍ້ຄວນຄຳນຶງໃນການຈັດຕັ້ງປະຕິບັດ ກອບວຽກຊີວະນາໆພັນ ຄຸນມິງ - ມອນເທວ (Kunming-Montreal)

ກອບວຽກຊີວະນາໆພັນສາກົນແມ່ນຫຍັງ?

ໂດຍທາງການແລ້ວແມ່ນຮູ້ກັນໃນຊື່ວ່າ ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ ເຊິ່ງຍຸດທະສາດສາກົນທີ່ໄດ້ຖືກຮັບຮອງຮ່ວມກັນໃນເດືອນທັນວາ ປີ 2022 ພາຍໃຕ້ ສົນທິສັນຍາຊີວະນາໆພັນ ຂອງອົງການສະຫະປະຊາຊາດ, ທີ່ມີເປົ້າໝາຍໃນການວາງແນວທາງໃຫ້ແຕ່ລະປະເທດພາຄີ ແລະ ພາກສ່ວນກ່ຽວຂ້ອງໄດ້ຢຸດຕິ ແລະ ຟື້ນຟູການສູນເສຍຊີວະນາໆພັນພາຍໃນປີ 2050 ໂດຍມີເປົ້າໝາຍສະເພາະ ແລະ ຄາດໝາຍສູ້ຊົນໃນປີ 2030.

ຂໍ້ຄວນຄຳນຶງໃນການຈັດຕັ້ງປະຕິບັດ ກອບວຽກຊີວະນາໆພັນ ຄຸນມິງ - ມອນເທວ (Kunming-Montreal)

ລົງເລິກກຸ່ມແມ່ຍິງ ນຳໃຊ້ເປົ້າໝາຍ 22:

ຮັບປະກັນການເປັນຕົວແທນຢ່າງຄົບຖ້ວນ, ສະເໝີພາບ, ມີສ່ວນຮ່ວມ, ມີປະສິດທິຜົນ ແລະ ຕອບສະໜອງບົດບາດຍິງ-ຊາຍ,ການມີສ່ວນຮ່ວມໃນການຕັດສິນໃຈ, ການເຂົ້າເຖິງຄວາມຍຸຕິທຳ ແລະ ຂໍ້ມູນຂ່າວສານທີ່ກ່ຽວຂ້ອງກັບຊີວະນາໆພັນ ໂດຍຊຸມເຜົ່າພື້ນເມືອງ ແລະ ຊຸມຊົນທ້ອງຖິ່ນ. ເຄົາລົບວັດທະນະທຳ ແລະ ສິດຂອງເຂົາເຈົ້າກ່ຽວກັບທີ່ດິນ, ອານາເຂດ, ຊັບພະຍາກອນ ແລະ ຄວາມຮູ້ພື້ນເມືອງ ເຊັ່ນດຽວກັບແມ່ຍິງ, ເດັກນ້ອຍ, ໄວໜຸ່ມ ແລະ ຄົນພິການ ພ້ອມຮັບປະກັນການປົກປ້ອງສິດທິມະນຸດດ້ານສິ່ງແວດລ້ອມຢ່າງເຕັມທີ່.

ລົງເລິກກຸ່ມໄວໜຸ່ມແມ່ນນຳໃຊ້ເປົ້າໝາຍ 23:

ຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຈັດຕັ້ງ ປະຕິບັດກອບວຽກ ໂດຍຜ່ານວິທີການຕອບສະໜອງບົດບາດ ຍິງ-ຊາຍ ໂດຍສະເພາະ ແມ່ຍິງ ແລະ ເດັກຍິງທຸກຄົນໄດ້ຮັບໂອກາດ ແລະ ຄວາມສາມາດເທົ່າທຽມກັນ ເພື່ອປະກອບສ່ວນ ເຂົ້າໃນ 3 ຈຸດປະສົງຂອງສົນທິສັນຍາ ລວມທັງການຮັບຮູ້ສິດສະເໝີພາບ, ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ການມີສ່ວນຮ່ວມທີ່ສະເໝີພາບ ແລະ ມີຄວາມໝາຍຂອງພວກເຂົາ ແລະ ນຳພາໃນທຸກລະດັບຂອງການປະຕິບັດ. ການມີສ່ວນຮ່ວມ, ນະໂຍບາຍ ແລະ ການຕັດສິນໃຈທີ່ກ່ຽວຂ້ອງກັບຊີວະນາໆພັນ.

ກຸ່ມຜູ້ດ້ອຍໂອກາດເຊັ່ນ: ໄວໜຸ່ມ, ແມ່ຍິງ, ຄົນພິການ, ຜູ້ອາຍຸສູງ, ຊົນເຜົ່າ ແລະ ຊຸມຊົນທີ່ມີຄວາມຫຼາກຫຼາຍທາງດ້ານບົດບາດຍິງຊາຍ ແມ່ນໄດ້ຖືກຈັດເປັນກຸ່ມຄົນທີ່ສຳຄັນ ໂດຍສະເພາະວ່າເປັນຜູ້ມີສ່ວນກ່ຽວຂ້ອງຫຼັກໃນການປັບປຸງ ແລະ ຈັດຕັ້ງປະຕິບັດ NBSAPs ດ້ວຍເຫດນີ້, ຈຶ່ງຄວນຈັດໃຫ້ມີການສົນທະນາປຶກສາຫາລືກັບກຸ່ມເຫຼົ່ານີ້.

ວິທີການ:

1. ລະດົມຄວາມຄິດ: ຄູຝຶກນຳພາຜູ້ເຂົ້າຮ່ວມທຸກຄົນລະດົມຄວາມຄິດວ່າ ກອບວຽກຊີວະນາໆພັນສາກົນແມ່ນຫຍັງ? ແລະ ເປັນຫຍັງຕ້ອງມີ? ຄູຝຶກລະດົມຄຳເຫັນຈາກຜູ້ເຂົ້າຮ່ວມ ແລ້ວໃຫ້ຜູ້ຊ່ວຍຂຽນໃສ່ກະດານ.

2. ນຳສະເໜີ: ຄູຝຶກນຳສະເໜີກອບວຽກຊີວະນາໆພັນສາກົນແມ່ນຫຍັງ ໂດຍການນຽມຂໍ້ມູນຂຽນໃສ່ເຈັຍແຜ່ນໃຫຍ່ໄວ້.

3. ຜູ້ເຂົ້າຮ່ວມອ່ານ: ຫຼັງຈາກນັ້ນ ຄູຝຶກຍາຍເຈັຍ ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທອ ໃຫ້ກັບຜູ້ເຂົ້າຮ່ວມທຸກຄົນໄດ້ອ່ານ

4. ກິດຈະກຳບົດບາດສົມມຸດ: ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈເລິກເຖິງ ເປົ້າໝາຍກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທອ 2030 ຄູຝຶກຈະໃຫ້ຜູ້ເຂົ້າຮ່ວມສ້າງບົດບາດສົມມຸດ ໂດຍການເລືອກ ໝວກຸ່ມຜູ້ດ້ອຍໂອກາດ ໂດຍແບ່ງອອກເປັນ 6 ກຸ່ມຄົນຄື: 1)ໄວໜຸ່ມ, 2) ແມ່ຍິງ, 3)ຄົນມີຄວາມພິການ, 4)ຜູ້ອາຍຸສູງ, 5)ກຸ່ມຄົນຫຼາກຫຼາຍທາງເພດ ແລະ 6)ກຸ່ມຊົນເຜົ່າ. ຜູ້ເຂົ້າຮ່ວມທຸກຄົນຈະໄດ້ເລືອກວ່າຕົນເອົງຈະເປັນບົດບາດໃດ, ຫຼັງຈາກເລືອກໄດ້ແລ້ວ ຄູຝຶກຈະຖາມວ່າ ລັກສະນະພິເສດຂອງແຕ່ລະກຸ່ມຄົນທີ່ທ່ານເລືອກມີແນວໃດ ຕົວຢ່າງ: ລັກສະນະພິເສດຂອງໄວໜຸ່ມມີແນວໃດ? ຕອບ: ແຂງແຮງ, ວ່ອງໄວ, ກ້າຕັດສິນໃຈ ແລະ ອື່ນໆ.

5. ວິເຄາະ 23 ເປົ້າໝາຍ: ເມື່ອທຸກຄົນເຂົ້າໃຈເຖິງບົດບາດ ແລະ ລັກສະນະເດັ່ນຂອງຕົວເອງທີ່ເລືອກແລ້ວ ຄູຝຶກຈະຢາຍບັດຄຳ ເປົ້າໝາຍສາກົນ ຄຸນມິງ-ມອນເທອ ໃຫ້ແຕ່ລະຄົນໂດຍແບບສຸ່ມເລືອກໜຶ່ງເປົ້າໝາຍ ເມື່ອຜູ້ເຂົ້າຮ່ວມໄດ້ບັດຄຳແລ້ວແມ່ນໃຫ້ໃຊ້ເວລາ ອ່ານ ແລະ ສຶກສາ 3 ນາທີ, ຫຼັງຈາກນັ້ນ ໃຫ້ລອງວິເຄາະດ້ວຍຕົວເອງໃນບົດບາດທີ່ເລືອກວ່າ ຖ້າຫາກເປົ້າໝາຍນີ້ບໍ່ຖືກຈັດຕັ້ງປະຕິບັດ ຫຼື ປະຕິບັດແຕ່ບໍ່ສຳເລັດ ມັນຈະສົ່ງຜົນແນວໃດໃຫ້ກັບຕົນເອງ(ຕາມບົດສົມມຸດ). ໃຫ້ແຕ່ລະຄົນຂຽນຄຳຕອບ ຂອງຕົວເອງໃສ່ເຈັຍບັດຄຳ ຄຳຕອບໜຶ່ງຕໍ່ໜຶ່ງບັດຄຳ.

6. ແລກປ່ຽນໃນກຸ່ມຍ່ອຍ (15ນາທີ): ຈາກນັ້ນໃຫ້ແຕ່ລະຄົນຈັບກຸ່ມກັນເປັນກຸ່ມຍ່ອຍຕາມບົດບາດທີ່ຕົນເອງເປັນ ແລກປ່ຽນກັນໃນກຸ່ມວ່າ:

   - ຜູ້ໃດໄດ້ເປົ້າໝາຍໃດ?
   - ແມ່ນຫຍັງທີ່ໃນກຸ່ມເຫັນວ່າຈະເປັນຜົນກະທົບຕໍ່ກັບກຸ່ມຂອງຕົນ?

7. ແລກປ່ຽນບົດຮຽນໃນກຸ່ມໃຫ່ຍ: ຄູຝຶກຂໍໃຫ້ແຕ່ລະກຸ່ມແລກປ່ຽນຄວາມຮູ້ສຶກຮ່ວມກັນວ່າ ຮູ້ສຶກແນວໃດຕໍ່ກັບບົດບາດທີ່ຕົນເອງໄດ້ຮັບ ແລະ ກຸ່ມຄົນນີ້ມີຄວາມສາມາດໃນການປະກອບສ່ວນເຮັດໃຫ້ເປົ້າໝາຍເຫຼົ່ານີ້ສຳເລັດໄດ້ຫຼືມີຂໍ້ຈຳກັດແນວໃດ.

8. ສະຫຼຸບ: ຄູຝຶກສະຫຼຸບໂດຍຍົກຂໍ້ຄວນຄຳນຶງໃນການຈັດຕັ້ງປະຕິບັດໂດຍຂຽນຂໍ້ຄວາມໃສ່ເຈັຍແຜ່ນໃຫຍ່.

ອຸປະກອນ:

- ເອກະສານຊ້ອນທ້າຍ 08: ໂພສເຕີ ກອບວຽກຊີວະນາໆພັນສາກົນ




- ໝວກເຈັຍ 6 ສີ.




- ເອກະສານຊ້ອນທ້າຍ 09: ເຈັຍບັດຄຳ ພິມແຕ່ລະຂໍ້ຂອງ 23 ເປົ້າໝາຍກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທອ.



- ເຈັຍບັດຄຳ, ປິກເຟີດ, ເຈັຍແຜ່ນໃຫຍ່.



ເວລາ: 50 ນາທີ



ບົດຮຽນທີ 06. ຍຸດທະສາດ ແລະ ແຜນດຳເນີນງານ ຊີວະນາໆພັນແຫ່ງຊາດ (NBSAP)

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ ແລະ ເຂົ້າຄວາມສຳຄັນຂອງການວາງແຜນຍຸດທະສາດຊີວະນາໆພັນ ແລະ ການຮ່ວມມືພັດທະນາ ແລະ ເຜີຍແຜ່ວິໄສທັດດ້ານຊີວະນາໆພັນ ຂອງປີ 2050 ທີ່ເປັນພື້ນຖານຂອງຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດຊີວະນາໆພັນ ແລະ ການຈັດຕັ້ງປະຕິບັດຕາມແຜນທີ່ໄດ້ກຳນົດ.

ເນື້ອໃນ:

- ອະທິບາຍ NBSAPs ແມ່ນເຄື່ອງມືລະດັບຊາດທີ່ຖືກອອກແບບເພື່ອປະຕິບັດເປົ້າໝາຍ ແລະ ຄຳໝັ້ນສັນຍາຂອງສົນທິສັນຍາກ່ຽວກັບຄວາມຫຼາກຫຼາຍທາງຊີວະພາບພາຍໃນແຕ່ລະປະເທດ.
- ຂໍ້ມູນປະຫວັດຄວາມເປັນມາຂອງ NBSAP ຄັ້ງທີ 1 ແລະ 2 ຂອງລາວ.
- ວິໄສທັດ, ເປົ້າໝາຍ, ຈຸດປະສົງ ແລະ ຍຸດທະສາດຂອງ NBSAP ທີ່ຜ່ານມາ 2016-2025.
- ພັດທະນາວິໄສທັດຮ່ວມກັນສຳລັບປີ 2030.

ວິທີການ:

- ຄູຝຶກເລີ່ມຕົ້ນໂດຍການຖາມຜູ້ເຂົ້າຮ່ວມສອງຄຳຖາມທີ່ສຳຄັນສຳລັບການສົນທະນາ:
  - ແຜນຍຸດທະສາດແມ່ນຫຍັງ?
  - ເປັນຫຍັງແຜນຍຸດທະສາດຈຶ່ງມີຄວາມສຳຄັນ?
- ຜູ້ເຂົ້າຮ່ວມແບ່ງປັນຄວາມຄິດຂອງເຂົາເຈົ້າພາຍໃນເວລາຈຳກັດ ຜູ້ຊ່ວຍບັນທຶກຄຳຕອບໃສ່ກະດານ. ຫຼັງຈາກນັ້ນ ຄູຝຶກໄດ້ສະຫຼຸບການສົນທະນາເພື່ອສ້າງຄວາມເຂົ້າໃຈຮ່ວມກັນກ່ຽວກັບການວາງແຜນຍຸດທະສາດ ແລະ ຄວາມສຳຄັນຕໍ່ຊີວະນາໆພັນຂອງຊາດ. ຈາກນັ້ນ ຄູຝຶກໄດ້ສະຫຼຸບ ແລະ ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງການສ້າງແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານຊີວະນາໆພັນແຫ່ງຊາດ.
- ຕໍ່ມາ ຄູຝຶກໄດ້ນຳສະເໜີກ່ຽວກັບການເຊື່ອມຕໍ່ລະຫວ່າງ NBSAPs ແລະ ສົນທິສັນຍາຊີວະນາໆພັນ (CBD), ໂດຍເນັ້ນໃສ່ມາດຕາ 6, ເຊິ່ງຮຽກຮ້ອງໃຫ້ບັນດາປະເທດພາຄີ ພັດທະນາຍຸດທະສາດ, ແຜນງານແຫ່ງຊາດເພື່ອການອະນຸລັກ ແລະ ນຳໃຊ້ຊີວະນາໆພັນແບບຍືນຍົງ ແລະ ສົມທົບເຂົ້າໃນແຜນງານ ແລະ ນະໂຍບາຍຂອງຂະແໜງການ ຫຼື ຂ້າມຂະແໜງການທີ່ກ່ຽວຂ້ອງ. ເພື່ອອະທິບາຍຂະບວນການນີ້ແມ່ນນຳໃຊ້ໂພສເຕີຂໍ້ມູນທົ່ວໄປທີ່ມີເນື້ອໃນທີ່ສຳຄັນຂອງ NBSAP 1 ແລະ NBSAP 2 - ອະທິບາຍໂດຍຫຍໍ້ວິໄສທັດ, ເປົ້າໝາຍ, ຈຸດປະສົງ ແລະ 5 ຂໍ້ສຳຄັນຍຸດທະສາດ.
- ເພື່ອປະກອບສ່ວນເຂົ້າໃນການປັບປຸງ ແລະ ຈັດຕັ້ງປະຕິບັດ ຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດ ຄັ້ງທີ 3, ຄູຝຶກແບ່ງຜູ້ເຂົ້າຮ່ວມເປັນກຸ່ມ ເພື່ອພັດທະນາວິໄສທັດຊີວະນາໆພັນຮ່ວມກັນ ແຕ່ນີ້ຫາໃນປີ 2030 ໂດຍຜ່ານຂັ້ນຕອນດັ່ງນີ້:

ຮອບທີ 1:	ກຸ່ມລະ 3-4 ຄົນ (ທັງໝົດໄດ້ 8-9 ກຸ່ມ).
ຮອບທີ 2:	ເອົາ 2 ກຸ່ມເຂົ້າກັນ 6-7 ຄົນ (ທັງໝົດໄດ້ 4-5 ກຸ່ມ).
ຮອບທີ 3:	ເອົາເຂົ້າກັນໃຫ້ໄດ້ 2 ກຸ່ມ.

- ແຕ່ລະກຸ່ມນຳສະເໜີວິໄສທັດຂອງກຸ່ມ, ພ້ອມດ້ວຍການສົນທະນາແລກປ່ຽນແບບເຕັມທີ່ເພື່ອສ້າງລວມວິໄສທັດຊີວະນາໆພັນແຫ່ງຊາດທີ່ເປັນເອກະພາບຮ່ວມກັນ.

ອຸປະກອນ:

- ເອກະສານຊ້ອນທ້າຍ 10: ໂພສເຕີ ຂໍ້ມູນທົ່ວໄປຂອງ NBSAPs ໃນ ສປປ ລາວ.



- ເອກະສານຊ້ອນທ້າຍ 11: 5 ຂໍ້ສຳຄັນຂອງຍຸດທະສາດ ແລະ ແຜນດຳເນີນງານ 2016-2025.



- ເຈ້ຍແຜ່ນໃຫຍ່, ສີຫຼຸງ, ສະກ໊ອດ.



ເວລາ: 60 ນາທີ.

ສຳລັບຜູ້ອຳນວຍຄວາມສະດວກ:

- ການຈັດການເວລາແມ່ນມີຄວາມສຳຄັນໃນແຕ່ລະການສົນທະນາ ແລະ ການລວມກຸ່ມ.
- ຮັບປະກັນການມີສ່ວນຮ່ວມ ໂດຍການຊຸກຍູ້ໃຫ້ຜູ້ເຂົ້າຮ່ວມທີ່ບໍ່ກ້າສະແດງອອກ (ງຽບ) ໄດ້ແບ່ງປັນທັດສະນະແນວຄິດຂອງເຂົາເຈົ້າ.
- ນຳໃຊ້ເຄື່ອງມືທີ່ເປັນພາບ (ໂພສເຕີ, ແຜ່ນພັບ) ເພື່ອບັນທຶກ ແລະ ສະແດງແນວຄວາມຄິດທີ່ພັດທະນາຕະຫຼອດກອງປະຊຸມ.

ບົດຮຽນທີ 07. ບົດບາດຂອງເຈົ້າໃນວຽກງານອານຸຮັກຊີວະນາໆພັນ

ຈຸດປະສົງ:

ເພື່ອເປັນການລະດົມການມີສ່ວນຮ່ວມຂອງໄວໜຸ່ມ ແລະ ແມ່ຍິງໃນການປະກອບສ່ວນໃນວຽກງານຊີວະນາໆພັນ ໂດຍສະເພາະ ແມ່ນເປັນການປະກອບຂໍ້ມູນໃນການສະເໜີແນະຕໍ່ການປັບປຸງ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ (NBSAP).

ເນື້ອໃນ:

- ການປະກອບສ່ວນຂອງໄວໜຸ່ມ ແລະ ແມ່ຍິງຕໍ່ກັບວຽກງານຊີວະນາໆພັນຂອງລາວໃນອານາຄົດ.
- ຈຸດສຸມຂອງເປົ້າໝາຍແຫ່ງຊາດ ແລະ ແຜນປະຕິບັດງານດ້ານວຽກງານຊີວະນາໆພັນຂອງລາວ.
- ປະຕິບັດການ, ກິດຈະກຳ, ໂຄງການທີ່ ໄວໜຸ່ມ ແລະ ແມ່ຍິງ ຢາກໃຫ້ເກີດມີ ແລະ ດຳເນີນດ້ວຍຕົວເອງ.
- ທ່າແຮງ ແລະ ຂໍ້ຄວນປັບປຸງດ້ານຄວາມອາດສາມາດຂອງ ໄວໜຸ່ມ ແລະ ແມ່ຍິງ ຕໍ່ການປະກອບສ່ວນໃນວຽກງານຊີວະນາໆພັນ.

ວິທີການ:

World Cafe ແມ່ນວິທີການເຮັດວຽກກຸ່ມແບບມີສ່ວນຮ່ວມທີ່ອອກແບບມາເພື່ອ ສົ່ງເສີມແນວຄວາມຄິດ ແລະ ການສົນທະນາທີ່ມີຄວາມໝາຍໂດຍຜ່ານການມີສ່ວນຮ່ວມຢ່າງຫ້າວຫັນຂອງຜູ້ເຂົ້າຮ່ວມ. ວິທີການນີ້ມັນຊຸກຍູ້ການຮຽນຮູ້ຮ່ວມກັນ, ການແບ່ງປັນຄວາມຮູ້, ແລະ ຊ່ວຍພັດທະນາຂໍ້ແນະນຳທີ່ມີລັກສະນະມີສ່ວນຮ່ວມ.

- **ພາບລວມຂະບວນການ:**

1. ກຳນົດຫົວຂໍ້ຕົ້ນຕໍ ຫຼື ບັນຫາ
   - » ກຳນົດຫົວຂໍ້ສຳຄັນ ຫຼື ບັນຫາ ສຳລັບການສົນທະນາ ແລະ ການຮຽນຮູ້.
2. ແຕ່ງຕັ້ງຜູ້ອຳນວຍຄວາມສະດວກໃນແຕ່ລະກຸ່ມ
   - » ເລືອກຜູ້ອຳນວຍຄວາມສະດວກ 1-2 ຄົນຕໍ່ກຸ່ມສົນທະນາ.
   - » ຜູ້ອຳນວຍຄວາມສະດວກເຫຼົ່ານີ້ຍັງຢູ່ໃນກຸ່ມຂອງເຂົາເຈົ້າເພື່ອນຳພາການສົນທະນາ, ເກັບກຳຈຸດສຳຄັນ ແລະ ສະຫຼຸບຜົນຂອງແຕ່ລະຮອບ, ສຳລັບຜູ້ເຂົ້າຮ່ວມແມ່ນໃຫ້ສະລັບປ່ຽນກັນເຂົ້າແຕ່ລະກຸ່ມ.
3. ການປ່ຽນກຸ່ມ
   - » ຜູ້ເຂົ້າຮ່ວມທີ່ຍັງເຫຼືອແມ່ນປ່ຽນໄປແຕ່ລະກຸ່ມ, ຍ້າຍຈາກກຸ່ມຫົວຂໍ້ທີ່ຫນຶ່ງໄປຫາອີກແຕ່ລະຫົວຂໍ້ຂອງແຕ່ລະຮອບ.
4. ຮອບສົນທະນາ
   - » ແຕ່ລະຮອບໃຊ້ເວລາປະມານ 20-30 ນາທີ, ເຮັດໃຫ້ຜູ້ເຂົ້າຮ່ວມມີສ່ວນຮ່ວມຫຼາຍທີ່ສຸດໃນ ຫົວຂໍ້ນັ້ນໆ ກ່ອນທີ່ຈະຍ້າຍໄປກຸ່ມຕໍ່ໄປ.
5. ຜົນໄດ້ຮັບຈາກການຄົ້ນຄວ້າ
   - » ຫຼັງຈາກທຸກຮອບສຳເລັດແລ້ວ, ຜູ້ອຳນວຍຄວາມສະດວກ (ຫຼືຕົວແທນກຸ່ມທີ່ເລືອກ) ຈາກແຕ່ລະກຸ່ມແມ່ນຈະສະເໜີຜົນສະຫຼຸບຂອງກຸ່ມຂອງເຂົາເຈົ້າ ແລະ ແນວຄວາມຄິດຫຼັກຕໍ່ກອງປະຊຸມທັງໝົດ.
6. ການສະທ້ອນບົດຮຽນສຸດທ້າຍ ແລະ ເປີດຮັບຄຳຄິດເຫັນ
   - » ຜູ້ເຂົ້າຮ່ວມສະເໜີຄຳຄິດຄຳເຫັນເພີ່ມເຕີມ, ແກ້ໄຂບັນຫາທີ່ບໍ່ໄດ້ຮັບການແກ້ໄຂ, ຫຼືແບ່ງປັນຄຳແນະນຳເພື່ອຮັບປະກັນວ່າທັດສະນະທັງໝົດໄດ້ຖືກພິຈາລະນາ.

- **ລະດົມຄວາມຄິດກ່ອນ World Cafe:** ຄູຝຶກນຳສະເໜີ KM-GBF ເປົ້າໝາຍ 22 (ກຸ່ມໄວໜຸ່ມ) ແລະ ເປົ້າໝາຍ 23 (ກຸ່ມແມ່ຍິງ) ເພື່ອເລີ່ມຕົ້ນການສົນທະນາລະດົມສະຫມອງກ່ຽວກັບວິທີການ ທົບທວນ ແລະ ປັບປຸງເປົ້າຫມາຍສາກົນທີ່ມີແລ້ວເຫຼົ່ານີ້ໃຫ້ເປັນເປົ້າໝາຍຂອງແຫ່ງຊາດ. ຄູຝຶກຕັ້ງຄຳຖາມກັບຜູ້ເຂົ້າຮ່ວມ ຈຸດໃດ ຫຼື ປະເດັນໃດໃນເປົ້າໝາຍ 22 ແລະ 23 ຄວນໄດ້ຮັບການທົບທວນ ແລະ ປັບປຸງໃຫ້ສອດຄ່ອງກັບການປະກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທຍ. ຈາກນັ້ນ ຄູຝຶກໄດ້ສັງລວມເອົາບັນດາຄຳເຫັນທີ່ຜູ້ເຂົ້າຮ່ວມໄດ້ປະກອບມາສັງລວມເພື່ອສ້າງເປັນເປົ້າໝາຍແຫ່ງຊາດຮ່ວມກັນ.

- **ຫົວຂໍ້ຂອງກຸ່ມສົນທະນາ ແລະ ຄຳຖາມແນະນຳສຳລັບການປັບປຸງ NBSAP:**
  - ແບ່ງການຄົ້ນຄວ້າອອກເປັນ 2 ກຸ່ມ, ໝູນກັນໄປໃນກຸ່ມເປັນ 2 ຮອບຂອງການສົນທະນາ. ໝາຍເຫດ: ເປົ້າໝາຍ 22 ນຳໃຊ້ສະເພາະກັບໄວໜຸ່ມ, ໃນຂະນະທີ່ເປົ້າໝາຍ 23 ນຳໃຊ້ສະເພາະກັບກຸ່ມແມ່ຍິງ, ແຕ່ລະເປົ້າໝາຍຈະໄດ້ຮັບການປຶກສາຫາລືຕາມອົງປະກອບຂອງກຸ່ມ (ເຊັ່ນ: ໄວຫນຸ່ມ ຫຼື ແມ່ຍິງ)
  - ກຸ່ມທີ 1: ຜັນຂະຫຍາຍການປະຕິບັດເພື່ອບັນລຸວິໄສທັດ ແລະ ເປົ້າໝາຍແຫ່ງຊາດ
    - » ນຳໃຊ້ເປົ້າໝາຍແຫ່ງຊາດສະບັບປັບປຸງ 22 ແລະ 23 ແລະ ວິໄສທັດແຫ່ງຊາດທີ່ໄດ້ກຳນົດຮ່ວມກັນໃນບົດຮຽນທີ6 ເພື່ອປຶກສາຫາລື:
    - » ແຜນການຈັດຕັ້ງປະຕິບັດປະເພດໃດແດ່ທີ່ ສປປ ລາວ ຄວນພັດທະນາເພື່ອບັນລຸວິໄສທັດຮອດປີ 2050 ແລະ ຄາດໝາຍສູ້ຊົນໃນປີ 2030?
    - » ກຳນົດບັນດາແຜນດຳເນີນງານ, ຍຸດທະສາດ ແລະ ກົນໄກການຈັດຕັ້ງປະຕິບັດທີ່ສຳຄັນ.
  - ກຸ່ມທີ 2: ເພື່ອສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ຊາວໜຸ່ມເຄືອຂ່າຍຊີວະນາໆພັນ
    - » ແມ່ນຫຍັງເປັນສິ່ງສະທ້ອນໃຫ້ເຫັນເຖິງຈຸດແຂງ, ຂໍ້ຈຳກັດ ແລະ ຄວາມຕ້ອງການພັດທະນາຂອງອົງການຈັດຕັ້ງຫ້ອງການ ຫຼື ເຄືອຂ່າຍທີ່ເຮັດວຽກກ່ຽວກັບບັນຫາແມ່ຍິງ ແລະ ໄວໜຸ່ມ ໃນ ສປປ ລາວ.
- **ການນຳສະເໜີຜົນໄດ້ຮັບ**
  - ຫຼັງຈາກການສົນທະນາທັງໝົດສຳເລັດແລ້ວ, ແຕ່ລະກຸ່ມຈະເລືອກຕົວແທນເພື່ອນຳສະເໜີຜົນການລະດົມຄວາມຄິດຂອງກຸ່ມຂອງຕົນຕໍ່ກຸ່ມໃຫຍ່.
  - ແຕ່ລະກຸ່ມຈະມີເວລາສູງສຸດ 15 ນາທີ ເພື່ອນຳສະເໜີຜົນໄດ້ຮັບ, ແນວຄວາມຄິດ ແລະ ຂໍ້ສະເໜີແນະທີ່ສຳຄັນຂອງເຂົາເຈົ້າ.

ອຸປະກອນ:

- ເອກະສານຊ້ອນທ້າຍ 12: ຂໍ້ແນະນຳຂະບວນການ World Cafe.




- ເອກະສານຊ້ອນທ້າຍ 13: ພິມເຈ້ຍ A4 ຮ່າງເປົ້າໝາຍດ້ານຊີວະນາໆພັນ 2030 ຂອງ ສປປ ລາວ




- ເອກະສານຊ້ອນທ້າຍ 14: ຕົວຢ່າງຕາຕະລາງຄົ້ນຄວ້າແຜນດຳເນີນງານ



- ເຈ້ຍແຜ່ນໃຫຍ່ຂຽນວິໄສທັດຊີວະນາໆພັນທີ່ເຫັນດີຮ່ວມກັນ(ຜົນໄດ້ຮັບຈາກບົດຮຽນທີ 6)




- ເຈ້ຍແຜ່ນໃຫຍ່ຂຽນ ເປົ້າໝາຍແຫ່ງຊາດທີ່ໄດ້ປັບປຸງຮ່ວມກັນ (ເປົ້າໝາຍ 22 ຂອງກຸ່ມ ໄວໜຸ່ມ, ເປົ້າໝາຍ 23 ຂອງກຸ່ມ ແມ່ຍິງ)



- ເຈ້ຍແຜ່ນໃຫຍ່, ເຟີດ, ເຈ້ຍບັດຄຳ



ເວລາ: 90 ນາທີ



ບົດຮຽນທີ 08. ພວກເຮົາໄດ້ຮຽນຮູ້ຫຍັງແດ່ (ປະເມີນຫຼັງການຝຶກ)

ຈຸດປະສົງ:

ເພື່ອປະເມີນການຮັບຮູ້ຂອງຜູ້ເຂົ້າຮ່ວມຕໍ່ກັບຍຸດທະສາດຊີວະນາໆພັນແຫ່ງຊາດ ພາຍຫຼັງການຝຶກອົບຮົມ.

ເນື້ອໃນ:

- ການປະເມີນຄວາມຮັບຮູ້ຂອງຕົວເອງຕໍ່ກັບ ສົນທິສັນຍາຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນຄຸນໝິງ-ມອນເທອ ແລະ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ.

ວິທີການ:

- ດຳເນີນການປະເມີນຫຼັງການຝຶກອົບຮົມຄືຮູບແບບດຽວກັນກັບການປະເມີນກ່ອນການຝຶກ.
- ຄູຝຶກໃຊ້ເຊືອກຟາງ ຫຼື ສະກ້ອດເຈ້ຍ ໝາຍສັນຍາລັກຮູບມືທັງ 5 ນິ້ວ ທີ່ມີຂະໜາດໃຫຍ່ ສາມາດໃຫ້ຄົນເຂົ້າໄປຢືນຢູ່ໃນມືແຕ່ລະນິ້ວໄດ້ ໂດຍແຕ້ມໃສ່ບໍລິເວນພື້ນຂອງຫ້ອງປະຊຸມ. ຈາກນັ້ນແນະນຳຜູ້ເຂົ້າຮ່ວມວ່າ: ໃຫ້ແຕ່ລະຄົນປະເມີນຄວາມຮັບຮູ້ຂອງຕົນເອງກ່ຽວກັບ ສົນທິສັນຍາຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ ໂດຍເຮັດເປັນ 3 ຮອບ ໃນ 3 ຫົວຂໍ້ ແລ້ວໃຫ້ຜູ້ເຂົ້າຮ່ວມເລືອກເຂົ້າໄປຢືນຢູ່ໃນ ນິ້ວມື 5 ນິ້ວທີ່ທີມງານຄູຝຶກໄດ້ໝາຍສັນຍາລັກຂຶ້ນມາ. ນິ້ວມື 5 ນິ້ວ ຕາມລະດັບຄວາມຮັບຮູ້ຂອງຕົນເອງດັ່ງນີ້:

ນິ້ວມື 5 ນິ້ວ ຕາມລະດັບຄວາມຮັບຮູ້ຂອງຕົນເອງດັ່ງນີ້:


1. **ນິ້ວກ້ອຍ:** ບໍ່ຮູ້ ແລະ ບໍ່ເຄີຍໄດ້ຍິນມາກ່ອນ.
2. **ນິ້ວນາງ:** ຮູ້ ແຕ່ ບໍ່ຮູ້ວ່າມີເນື້ອໃນແບບໃດ.
3. **ນິ້ວກາງ:** ຮູ້ ແລະ ພໍຮູ້ຈັກວ່າມີເນື້ອໃນແບບໃດ.
4. **ນິ້ວຊີ້:** ຮູ້ດີ ແລະ ໄດ້ສຶກສາ ຄົ້ນຄ້ວ້ຜ່ານເອກະສານມາກ່ອນ.
5. **ນິ້ວໂປ້:** ຮູ້ດີ ແລະ ສາມາດແນະນຳຜູ້ອື່ນໄດ້.

- ພາຍຫຼັງທີ່ຜູ້ເຂົ້າຮ່ວມເລືອກຢືນຢູ່ນິ້ວມືແຕ່ລະນິ້ວແລ້ວ ຄູຝຶກຕັ້ງຄຳຖາມ ຜູ້ເຂົ້າຮ່ວມອາດຈະເລືອກເອົາບາງຄົນຕອບໂດຍໃຫ້ຕາງໜ້າແຕ່ລະນິ້ວມືໃຫ້ເຫດຜົນວ່າເປັນຫຍັງຕົນເອງຈຶ່ງເລືອກຢືນຢູ່ນິ້ວນັ້ນ.
- ຄູຝຶກບັນທຶກຜົນການປະເມີນກ່ອນການຝຶກອົບຮົມເກັບໄວ້ ຫຼື ອາດຈະຖ່າຍຮູບເກັບໄວ້.



ອຸປະກອນ:

- ເຊືອກ.



- ສະກ້ອດ.



ເວລາ: 15 ນາທີ

ບົດຮຽນເພີ່ມຕື່ມຂອງ

ກຸ່ມໄວໜຸ່ມ

ການສຳຫຼວດຂໍ້ມູນແບບອອນລາຍ ກ່ຽວກັບ ຄວາມເຂົ້າໃຈຂອງ ກຸ່ມໄວໜຸ່ມຕໍ່ ກັບວຽກງານຊີວະນາໆພັນໃນ ສປປ ລາວ

ຈຸດປະສົງ:

- *ເພື່ອສຳຫຼວດທັດສະນະ, ປະສົບການ ແລະ ຂໍ້ສະເໜີແນະຂອງໄວໜຸ່ມ ກ່ຽວກັບການອະນຸລັກຊີວະນາໆພັນຂອງລາວ ແລະ ນຳໃຊ້ຂໍ້ມູນເຂົ້າໃນການສະໜັບສະໜູນການປັບປຸງ NBSAP.*
- *ເພື່ອສ້າງຊ່ອງທາງເລືອກເພີ່ມຕື່ມສຳລັບການການປະກອບສ່ວນຈາກໄວໜຸ່ມ ທີ່ທົດແທນການໃຫ້ຄຳປຶກສາດ້ວຍຕົນເອງ ຍ້ອນວ່າໄວໜຸ່ມມີຄວາມສາມາດໃນການເຂົ້າເຖິງເວທີດີຈິຕອນໄດ້ດີ.*

ເນື້ອໃນ

ຊຸດຄຳຖາມສຳຫຼວດທີ່ກວມເອົາຫົວຂໍ້ຂ້າງລຸ່ມນີ້:

- ຂໍ້ມູນທົ່ວໄປຂອງຜູ້ຕອບ (ອາຍຸ, ເພດ, ສະຖານທີ່, ແລະອື່ນໆ).
- ຄວາມຮັບຮູ້ ແລະ ຄວາມເຂົ້າໃຈກ່ຽວກັບຄຳວ່າ "ຊີວະນາໆພັນ".
- ຂໍ້ສັງເກດ ແລະ ຄວາມເປັນຫ່ວງກ່ຽວກັບຊີວະນາໆພັນຂອງລາວ.
- ຂໍ້ສະເໜີເພື່ອການປະຕິບັດຂອງໄວໜຸ່ມ ແລະ ວິທີແກ້ໄຂໃນການອະນຸລັກຊີວະນາໆພັນ.
- ບົດບາດຂອງໄວໜຸ່ມ ແລະ ການປະກອບສ່ວນເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດດ້ານຊີວະນາໆພັນ.


ວິທີການ:

1. ການອອກແບບແບບສອບຖາມ
   - ແບບສອບຖາມໄດ້ຖືກອອກແບບໂດຍແບ່ງອອກເປັນ 5 ພາກ, ແຕ່ລະພາກມີຄຳຖາມສະເພາະສອດຄ່ອງກັບຈຸດປະສົງຂອງບົດຮຽນ.
2. ການສຳຫຼວດແບບອອນລາຍ
   - ແບບສອບຖາມໄດ້ຖືກອັບໂຫຼດຂຶ້ນເປັນເຄື່ອງມືສຳຫຼວດອອນລາຍ (Kobo Collect) ເພື່ອອຳນວຍຄວາມສະດວກໃນການເຂົ້າເຖິງ ແລະ ຕອບແບບສອບຖາມຂອງໄວໜຸ່ມໃນທົ່ວປະເທດ.
3. ການແຈກຢາຍແບບສຳຫຼວດ
   - ລິ້ງແບບສອບຖາມອອນລາຍໄດ້ຖືກແບ່ງປັນຜ່ານເຄືອຂ່າຍໄວໜຸ່ມ ແລະ ຜ່ານສື່ສັງຄົມອອນລາຍເພື່ອໃຫ້ເຂົ້າເຖິງກຸ່ມໄວໜຸ່ມທີ່ຫຼາກຫຼາຍໃນທົ່ວປະເທດ.
   - ການສຳຫຼວດໄດ້ເປີດໃຫ້ຕອບໄດ້ເປັນເວລາ 5 ມື້ເພື່ອໃຫ້ເວລາພຽງພໍສຳລັບການຕອບ.
4. ການເກັບກຳຂໍ້ມູນ ແລະ ລາຍງານ
   - ຫຼັງຈາກໄລຍະເວລາການສຳຫຼວດໝົດລົງ ຄຳຕອບທັງໝົດໄດ້ຖືກຮວບຮວມ ແລະ ວິເຄາະ.
   - ບົດລາຍງານສະຫຼຸບໄດ້ຖືກກະກຽມໂດຍເນັ້ນໃສ່ຜົນໄດ້ຮັບສຳຄັນ, ຄວາມເຂົ້າໃຈຂອງໄວໜຸ່ມ ແລະ ຂໍ້ສະເໜີແນະທີ່ສາມາດປະຕິບັດໄດ້.

- ຂໍ້ມູນທີ່ເກັບກຳໄດ້ ແລະ ຄຳຄິດເຫັນຂອງໄວໜຸ່ມໄດ້ຖືກລວມເຂົ້າໃນຂະບວນການປຶກສາຫາລືເພື່ອທົບທວນ ແລະ ປັບປຸງ NBSAP

ອຸປະກອນ

- ແບບສອບຖາມ.




ເວລາ: 5 ມື້

5 days online questionnaires are required.

ໝາຍເຫດ:

- ຮັບປະກັນວ່າໄວໜຸ່ມຮັບຮູ້ເຖິງຈຸດປະສົງຂອງການສຳຫຼວດກ່ອນການແຈກຢາຍແບບຟອມ.
- ຊຸກຍູ້ການມີສ່ວນຮ່ວມຂອງໄວໜຸ່ມທີ່ຫຼາກຫຼາຍ, ລວມທັງນັກຮຽນ, ຊາວໜຸ່ມຊຸມຊົນ, ແລະ ກຸ່ມຊາວໜຸ່ມນອກລະບົບ.
- ສະເໜີບົດແນະນຳສັ້ນໆ ອະທິບາຍວ່າ NBSAP ແມ່ນຫຍັງ ແລະ ເປັນຫຍັງຈຶ່ງເຮັດການສຳຫຼວດນີ້; ຍົກປະເດັນນີ້ຂຶ້ນກ່ອນຈະເລີ່ມການສຳຫຼວດ.
- ແບ່ງປັນລິ້ງກ່ຽວກັບ NBSAP ຂອງລາວສະບັບປັດຈຸບັນເພື່ອໃຫ້ຜູ້ເຂົ້າຮ່ວມສາມາດຮຽນຮູ້ເພີ່ມເຕີມຖ້າພວກເຂົາຕ້ອງການ.
- ໃຫ້ແນ່ໃຈວ່າຄຳຖາມການສຳຫຼວດແມ່ນກົງໄປກົງມາ, ສັ້ນກະທັດຮັດ ແລະ ງ່າຍທີ່ຈະເຂົ້າໃຈ.




ສຳລັບກຸ່ມ ຊຸມຊົນ ແລະ ຊົນເຜົ່າ



ພາກນີ້ ໄດ້ບົດຮຽນຈາກກອງປະຊຸມເຜີຍແຜ່ສົນທະນາ ໃນຈັດໃນ 3 ພາກພື້ນທີ່ແຕກຕ່າງກັນຂອງລາວ, ແຕ່ລະພາກພື້ນມີລັກສະນະເປັນເອກະລັກຂອງຊົນເຜົ່າ, ລັກສະນະທາງພູມສັນຖານ, ວິຖີຊີວິດ ແລະ ຄວາມກັງວົນ ເຊັ່ນ: ຊຸມຊົນພູດອຍທາງພາກເໜືອ, ປະຊາກອນທີ່ເພິ່ງພາອາໄສປ່າໄມ້ໃນເຂດສາຍພູຫຼວງໃນພາກກາງ ແລະ ຊຸມຊົນແຄມແມ່ນ້ຳຂອງທາງພາກໃຕ້.

ໃນການຝຶກອົບຮົມແມ່ນໄດ້ຈັດຂຶ້ນໃນ 3 ພື້ນທີ່ ລວມມີ:

1. **ເມືອງ ບໍ່ວລະພາ, ແຂວງ ຄຳມ່ວນ,**
2. **ເມືອງ ໂຂງ, ແຂວງ ຈຳປາສັກ**
3. **ເມືອງ ຊ້ອນ, ແຂວງ ຫົວພັນ,**



ບົດຮຽນທີ 01. ແນະນຳຕົວເອງ

ຈຸດປະສົງ:


ໃຫ້ຜູ້ເຂົ້າຮ່ວມ ແລະ ທີມງານຄູຝຶກໄດ້ຮູ້ຈັກກັນຜ່ານການສົນທະນາໃນກຸ່ມ.

ເນື້ອໃນ

- ກິດຈະກຳຕ້ອນຮັບ: ການເຕົ້າໂຮມສະມາທິຂອງຜູ້ເຂົ້າຮ່ວມຜ່ານສຽງເພງ.
- ຮ້ອງເພງຮ່ວມກັນ: ເພງ ສະບາຍດີ.

ອຸປະກອນ

- ເຈ້ຍແຜ່ນໃຫຍ່ຂຽນເນື້ອເພງ ສະບາຍດີ.



ເວລາ: 20 ນາທີ

ສຽງເພງ ສະບາຍດີ

ສະບາຍດີ	ວັນນີ້ມາພົບກັນ
ແສນສຸກສັນ	ສຳລານກັນທົ່ວໜ້າ
ສຸດດີໃຈ	ວັນນີ້ທີ່ໄດ້ມາ
ພັດທະນາ	ຊຸມຊຶນໃຫ້ກ້າວໄປ
ລາໆ ລາໆ	ລັນໆ ລາ (ຊ້ຳ 3 ເທື່ອ)

ການປະກອບສ່ວນຂອງເຮົາຕໍ່ກັບຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດຜ່ານການເຊື່ອມໂຍງຕົວຕົນກັບທຳມະຊາດ.

ວິທີການ:

- ເພງ ສະບາຍດີ: ຄູຝຶກນຳພາຜູ້ເຂົ້າຮ່ວມຮ້ອງເພງ ສະບາຍດີ
- ແນະນຳຕົວ: ຫຼັງຈາກນັ້ນໃຫ້ຜູ້ເຂົ້າຮ່ວມ ແນະນຳຕົວເອງໂດຍໃຫ້ບອກຊື່, ຊື່ຫຼິ້ນ ຫຼື ຊື່ເຕັມກໍ່ໄດ້.
- ປຽບທຽບກັບທຳມະຊາດ: ຫຼັງຈາກນັ້ນ, ໃຫ້ປຽບໂຕເອງເປັນຫຍັງໃນຊີວະນາໆພັນ ຫຼື ຊັບພະຍາກອນທຳມະຊາດຂອງໂລກນີ້ ຕົວຢ່າງ: ຈັນທະລັງສີ ປຽບເໝືອນ ແມ່ນ້ຳ.
- ສົນທະນາ: ເມື່ອທຸກຄົນແນະນຳຕົວຄົບແລ້ວ ຄູຝຶກຕັ້ງຄຳຖາມສົນທະນາ ສິ່ງທີ່ເຮົາປຽບໃສ່ໂຕເອງນັ້ນ ມັນມີຄວາມສຳຄັນແນວໃດ?.
- ລະດົມຄວາມຄິດ: ໃຫ້ຜູ້ເຂົ້າຮ່ວມສ່ວນໜຶ່ງຕອບຄຳຖາມແລ້ວເຊື່ອມຕໍ່ກັບຫົວຂໍ້ບົດຮຽນກ່ຽວກັບຊີວະນາໆພັນ.



ບົດຮຽນທີ 02. ຄວາມເຂົ້າໃຈພື້ນຖານກ່ຽວກັບຊີວະນາໆພັນ, ຊັບພະຍາກອນທຳມະຊາດ ແລະ ຄວາມສ່ຽງ

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມເຂົ້າໃຈພື້ນຖານຄວາມຮູ້ດ້ານຊີວະນາໆພັນ, ຊັບພະຍາກອນທຳມະຊາດ ແລະ ປັດໄຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ ການສູນພັນ.

ເນື້ອໃນ:

- ນິຍາມຂອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ.
- ປັດໄຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການສູນພັນ.

ນິຍາມຂອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ

ຊີວະນາໆພັນ ໝາຍເຖິງຄວາມຫຼາກຫຼາຍຂອງຊະນິດພັນ ຂອງ ທຸກສິ່ງທີ່ມີຊີວິດໃນທຳມະຊາດເຊັ່ນ: ພືດ, ສັດ, ແມງໄມ້ ແລະ ຈຸລິນຊີຕ່າງໆ. ຊີວະນາໆພັນຊ່ວຍໃຫ້ທຳມະຊາດມີຄວາມ ສົມດຸນ.

ຊັບພະຍາກອນທຳມະຊາດ ໝາຍເຖິງສິ່ງທີ່ຊ່ວຍໃຫ້ເຮົາ ດຳລົງຊີວິດຢູ່ ລວມມີ: ນ້ຳ, ອາກາດ, ດິນ, ຕົ້ນໄມ້, ແສງແດດ ແລະ ແຮ່ທາດຕ່າງໆ. ພວກເຮົານຳໃຊ້ຊັບພະຍາກອນທຳມະຊາດ ເພື່ອເປັນອາຫານ, ທີ່ພັກ ແລະ ພະລັງງານ.

ປັດໄຈທີ່ເຮັດໃຫ້ມີຄວາມສ່ຽງຕໍ່ການສູນພັນ

ໃນທົ່ວໂລກ, ປະຊາກອນສັດປ່າໄດ້ຫຼຸດລົງປະມານ 70% ໃນ ໄລຍະ 50 ປີຜ່ານມາ, ນັກວິທະຍາສາດຄາດຄະເນວ່າຫຼາຍຮ້ອຍ ຫາຫຼາຍພັນຊະນິດອາດຈະສູນພັນໃນແຕ່ລະປີ, ເຖິງແມ່ນວ່າ ຈຳນວນແມ່ນບໍ່ແນ່ນອນ. ການສູນເສຍຄວາມຫຼາກຫຼາຍທາງ ດ້ານຊີວະນາໆພັນຍັງເພີ່ມຂຶ້ນຢູ່ໃນ ສປປ ລາວ.

ສາເຫດແມ່ນມາຈາກການລ່າສັດແບບຊະຊາຍ, ການ ຖາງປ່າເຮັດໄຮ່, ການທຳລາຍບ່ອນຢູ່ອາໃສ, ການຂຸດຄົ້ນ ຊັບພະຍາກອນທຳມະຊາດເກີນຂອບເຂດ, ໄພພິບັດທາງ ທຳມະຊາດ, ແລະ ໄພອັນຕະລາຍທີ່ກ່ຽວຂ້ອງກັບການປ່ຽນແປງ ສະພາບດິນຟ້າອາກາດ.



ວິທີການ:

- ຕິດຮູບຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດທີ່ກຽມໄວ້ໃສ່ຝາ ແລະ ໃຫ້ຜູ້ເຂົ້າຮ່ວມ ຊຸມຊື່ທີ່ຕົວເອງໄດ້ປຸບໜຸບໄວ້ໃນເວລາແນະນຳຕົວ ແລ້ວເອົາໄປຕິດຮ່ວມກັນໄວ້ບ່ອນດຽວ.


ຮູບພາບທີ່ກຽມໄວ້.

ຮູບພາບຊີວະນາໆພັນ: ເຜິ້ງ, ດອກໄມ້, ນົກ, ປາ, ຂີ້ກະເດືອນ, ຊ້າງ, ໄຄນ້ຳ, ຈິ້ນາຍ, ລີງ, ກວາງ, ເສືອ, ກະຮອກ, ຂະຍຸ, ແມງກະເບື້ອ, ຈິ່ຫຼ່ຳ, ກົບ, ເຫັດ.

ຮູບພາບຊັບພະຍາກອນທຳມະຊາດ: ນ້ຳ, ຫີນ, ຕົ້ນໄມ້, ດິນ, ຊາຍ, ແສງແດດ, ເຊື້ອໄຟ, ອາກາດ, ນ້ຳເຊ, ນ້ຳສ້າງ, ນ້ຳລິນ ຫ້ວຍນ້ຳ, ພື້ນທີ່ດິນ, ທົ່ງນາ, ແຮ່ຄຳ, ແຮ່ເຫຼັກ, ແຮ່ທອງແດງ, ຂີ້ເຈຍ, ໄມ້ໄຜ່.

- ຄູຝຶກນຳພາຜູ້ເຂົ້າຮ່ວມຫຼິ້ນເກມເລືອກຮູບພາບໂດຍແບ່ງຜູ້ເຂົ້າຮ່ວມເປັນ 6ກຸ່ມ ໂດຍການນັບເລກ 1 ຫາ 6.
- ຈາກນັ້ນຄູຝຶກຊຸມຊື່ກຸ່ມໃສ່ເຈ້ຍແຜ່ນໃຫຍ່ຕາມຕາຕະລາງທີ່ໄດ້ກຽມໄວ້.
- ຄູຝຶກໃຫ້ແຕ່ລະຄົນເລືອກເອົາຮູບ 2 ຮູບ.
  - » ຮູບຊີວະນາໆພັນ 1 ຮູບ ແລະ
  - » ຮູບຊັບພະຍາກອນທຳມະຊາດ 1 ຮູບ.

ຫຼັງຈາກນັ້ນໃຫ້ເອົາມາຕິດໃສ່ເຈ້ຍຂອງກຸ່ມຕົນເອງ



- ເມື່ອໄດ້ຄົບທຸກຄົນແລ້ວໃຫ້ປຶກສາຫັນໃນກຸ່ມວ່າມີຄວາມຖືກຕ້ອງ ແລະ ເຫັນດີຮ່ວມກັນບໍ່
- ແລ້ວນຳເອົາຜົນຂອງແຕ່ລະກຸ່ມມາຕິດໄວ້ກະດານແຕ່ຍັງບໍ່ສະເຫຼີຍຄຳຕອບ.
- ຫຼັງຈາກນັ້ນຄູຝຶກຕັ້ງຖາມຜູ້ເຂົ້າຮ່ວມຕື່ມ ຊັບພະຍາກອນທຳມະຊາດ ແລະ ຊີວະນາໆພັນໝາຍເຖິງຫຍັງ? ໃນຄວາມເຂົ້າໃຈຂອງແຕ່ລະຄົນ.
- ຄູຝຶກນຳສະເໜີນິຍົດຮຸບຂອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ ໃຫ້ຜູ້ເຂົ້າຮ່ວມທຸກຄົນເຂົ້າໃຈເປັນອັນດຽວກັນຕາມນິຍົດຮຸບໂດຍການສາຍສະໄລ້ ນິຍາມຂອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈເປັນອັນດຽວກັນ.
- ສະເຫຼີຍຄຳຕອບໂດຍການໃຫ້ແຕ່ລະກຸ່ມປຸ່ນຮູບທີ່ຜິດໃຫ້ຖືກ ແລະ ສົນທະນາຂໍ້ທີ່ຜູ້ເຂົ້າຮ່ວມຍັງມີຄວາມສົນໃຈວ່າຮູບນີ້ແມ່ນຫຍັງແທ້.

ຫຼັງຈາກນັ້ນ ສະເໜີປັດໃຈສ່ຽງຂອງການສູນພັນ.

ອຸປະກອນ:

- ເອກະສານຊ້ອນທ້າຍ 01: ໂພສເຕີ ນິຍາມ ແລະ ປັດໃຈສ່ຽງຂອງຊີວະນາໆພັນ.




- ເຈ້ຍແຜ່ນໃຫຍ່ຊຸມ ໂຈດວິທີການຫຼິ້ນເກມ ທວຍຮູບພາບ.



- ເຈ້ຍແຜ່ນໃຫຍ່ຕິດຮູບແຕ່ລະກຸ່ມ.



- ຮູບພາບປະກອບ (ຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ).



ເວລາ: 60 ນາທີ

ບົດຮຽນທີ 03. ສົນທິສັນຍາວ່າດ້ວຍຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນຄຸນມິງ-ມອນເທວ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ຮູ້ຈັກກັບສົນທິສັນຍາຊີວະນາໆພັນ, ກອບວຽກສາກົນຄຸນມິງ-ມອນເທວ ແລະ ຍຸດທະສາດຊີວະນາໆພັນແຫ່ງຊາດ ແລະ ການເຊື່ອມໂຍງກັນຂອງ ທັງ 3 ປະເດັນ.

ເນື້ອໃນ:

- ສົນທິສັນຍາຊີວະນາໆພັນ
- ກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ
- ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ (NBSAP):

ສົນທິສັນຍາຊີວະນາໆພັນ

- ຄວາມໝາຍ ແລະ ຈຸດປະສົງ
- ການດຳເນີນງານຂອງ CBD ແລະ ການຈັດຕັ້ງປະຕິບັດໃນລາວ.

ກອບວຽກຊີວະນາໆພັນສາກົນແມ່ນຫຍັງ?

- ແຜນການເຮັດວຽກຮ່ວມກັນ ແລະ ກອບເປົ້າໝາຍພາຍໃຕ້ CBD - ກອບວຽກຊີວະນາໆພັນຄຸນມິງ-ມອນເທວ (KM-GBF).
- ວິໄສທັດ 2050 - "ການຢູ່ຮ່ວມກັນຢ່າງກົມກ່ຽວກັບທຳມະຊາດ."
- ເນັ້ນໃສ່ເປົ້າໝາຍທີ 22 - ຮັບປະກັນການເປັນຕົວແທນຢ່າງຄົບຖ້ວນ, ການມີຕົວຕົນ, ການມີສ່ວນຮ່ວມ ແລະ ບົດບາດຍິງ-ຊາຍ ໃນການຕັດສິນໃຈທີ່ກ່ຽວຂ້ອງກັບຊີວະນາໆພັນ, ປົກປ້ອງສິດ, ຄວາມຮູ້ ແລະ ວັດທະນະທຳອັນເປັນມູນເຊື້ອຂອງຄົນຊົນເຜົ່າ, ຊຸມຊົນທ້ອງຖິ່ນ, ແມ່ຍິງ, ເດັກຍິງ, ໄວໜຸ່ມ ແລະ ຄົນມີຄວາມພິການ, ພ້ອມດຽວກັນກັບການປົກປ້ອງສິດທິມະນຸດ ແລະ ສິດທິສິ່ງແວດລ້ອມ.

ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ (NBSAP):

- ຄວາມສຳພັນລະຫວ່າງ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນ ຂອງ ສປປ ລາວ ແລະ ສົນທິສັນຍາຊີວະນາໆພັນສາກົນ.
- ພາບລວມຂອງ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນ ປະຈຸບັນຂອງ ສປປ ລາວ ແລະ ຄວາມສອດຄ່ອງກັບຄຳໝັ້ນສັນຍາໃນສາກົນ.

ວິທີການ:

1. ລະດົມຄວາມຄິດ: ຄູຝຶກຕັ້ງຄຳຖາມວ່າ "ສົນທິສັນຍາແມ່ນຫຍັງ?" ເພື່ອໃຫ້ທຸກຄົນເຂົ້າໃຈຮ່ວມກັນ.
2. ຄູຝຶກນຳສະເໜີໂພສເຕີການເກີດຂຶ້ນຂອງສົນທິສັນຍາຊີວະນາໆພັນສາກົນ (1987-1996).
3. ຄູຝຶກສືບຕໍ່ນຳສະເໜີ ໂພສເຕີ ຂໍ້ມູນເບື້ອງຕົ້ນສະເພາະ ຂອງສົນທິສັນຍາຊີວະນາໆພັນ;
4. ນຳສະເໜີໂພສເຕີ ການເກີດຂຶ້ນຂອງ ສົນທິສັນຍາຊີວະນາໆພັນໃນ ສປປ ລາວ;
5. ນຳສະເໜີຫົວຂໍ້ຕໍ່ໄປກ່ຽວກັບ ກອບວຽກຊີວະນາໆພັນສາກົນ ທີ່ເນັ້ນໃສ່ເປົ້າໝາຍສະເພາະ ທີ 22;
6. ຄູຝຶກອະທິບາຍເພີ່ມຕື່ມການພົວພັນກັນຂອງ ສົນທິສັນຍາຊີວະນາໆພັນ, ກອບວຽກຊີວະນາໆພັນສາກົນຄຸນມິງ-ມອນເທວ ແລະ ແຜນຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ.

ອຸປະກອນ:

- ເອກະສານຊ້ອນທ້າຍ 03: ໂພສເຕີ ການເກີດຂຶ້ນຂອງ CBD ໃນສາກົນ.



- ເອກະສານຊ້ອນທ້າຍ 04: ໂພສເຕີ ການເກີດຂຶ້ນຂອງ CBD ໃນລາວ.



- ເອກະສານຊ້ອນທ້າຍ 05: ໂພສເຕີຂໍ້ມູນທົ່ວໄປຂອງ ສົນທິສັນຍາຊີວະນາໆພັນ CBD.



- ເອກະສານຊ້ອນທ້າຍ 06: ໂພສເຕີ ກົນໄກ ການເຮັດວຽກຂອງ CBD ໃນສາກົນ.



- ເອກະສານຊ້ອນທ້າຍ 08: ໂພສເຕີ ກອບວຽກຊີວະນາໆພັນສາກົນ



- ເອກະສານຊ້ອນທ້າຍ 10: ໂພສເຕີ ຂໍ້ມູນທົ່ວໄປຂອງ NBSAPs.



ເວລາ: 30 ນາທີ

ບົດຮຽນທີ 04. ພູມປັນຍາທ້ອງຖິ່ນອັນເປັນມູນເຊື້ອ ແລະ ວິໄສທັດຂອງຊຸມຊົນ

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ລະນຶກຄືນຕໍ່ກັບພູມປັນຍາທ້ອງຖິ່ນອັນເປັນມູນເຊື້ອ, ການດຳລົງຊີວິດ, ຮີດຄອງປະເພນີ, ວັດທະນະທຳ ແລະ ຄວາມເຊື່ອຖືຕ່າງໆທີ່ກ່ຽວພັນກັບທຳມະຊາດ ເພື່ອວາງວິໄສທັດຂອງຊຸມຊົນດ້ວຍຊຸມຊົນເອງ.

ເນື້ອໃນ:

- ພູມປັນຍາທ້ອງຖິ່ນອັນເປັນມູນເຊື້ອ, ຮີດຄອງປະເພນີ, ວັດທະນະທຳ ແລະ ຄວາມເຊື່ອຂອງຊຸມຊົນທີ່ພົວພັນກັບທຳມະຊາດ.
- ພຶດຕິກຳ ແລະ ຮູບແບບການດຳລົງຊີວິດຂອງຊຸມຊົນທີ່ອາໄສທຳມະຊາດ.
- ການວາງວິໄສທັດໃນການອະນຸລັກ ຊີວະນາໆພັນແບບຍືນຍົງຂອງຊຸມຊົນ.

ວິທີການ


1. ການສ້າງກຸ່ມ:
   - ຄູຝຶກແບ່ງຜູ້ເຂົ້າຮ່ວມອອກເປັນ 4 ກຸ່ມ (ກຸ່ມແມ່ຍິງ 2 ກຸ່ມ ແລະ ກຸ່ມຜູ້ຊາຍ 2 ກຸ່ມ).
2. ກິດຈະກຳຕົ້ນໄມ້ວິໄສທັດ:
   - ຂັ້ນຕອນທີ 1: ຮາກເຫງົ້າ (ອະດີດ ແລະ ປະຈຸບັນ)
     - » ແຕ່ລະກຸ່ມແຕ້ມຮູບຕົ້ນໄມ້ໃສ່ເຈັຍແຜ່ນໃຫຍ່ໃຫ້ເຫັນຮາກ, ລຳຕົ້ນ ແລະ ກິ່ງງ່າ
     - » ແຕ່ລະກຸ່ມເລີ່ມຈາກ ການສົນທະນາຮາກເຫງົ້າ-ຄວາມຮູ້ດ້ານພູມປັນຍາທ້ອງຖິ່ນ, ການດຳລົງຊີວິດ, ຮີດຄອງປະເພນີ, ວັດທະນະທຳ ແລະ ຄວາມເຊື່ອຖືຕ່າງໆທີ່ຕິດພັນກັບຊີວະນາໆພັນ
     - » ແຕ່ລະກຸ່ມລະດົມ ແລະ ຂຽນໃສ່ເຈັຍກ້ຳຕິດໃສ່ເບື້ອງຮາກຂອງຕົ້ນໄມ້ທີ່ແຕ້ມໄວ້ໃນເຈັຍແຜ່ນໃຫຍ່ ແລ້ວເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນໃຫ້ມີຄວາມຫຼາກຫຼາຍ.
   - ຂັ້ນຕອນທີ 2: ກິ່ງງ່າ (ວິໄສທັດໃນອານາຄົດ)
     - » ຫຼັງຈາກນັ້ນສົນທະນາດ້ານກິ່ງງ່າ-ວິໄສທັດຕໍ່ອະນາຄົດ ລະດົມຄວາມຄິດໃນແຕ່ລະກຸ່ມໂດຍຕັ້ງຄຳຖາມ "ໃນອະນາຄົດອີກ 10ປີ ຂ້າງໜ້າ ພວກທ່ານຢາກເຫັນຊັບພະຍາກອນ ທຳມະຊາດ ແລະ ຊີວະນາໆພັນຂອງບ້ານທ່ານເປັນແນວໃດ?"
     - » ລະດົມຄວາມຄິດ ແລະ ຂຽນຂໍ້ຄວາມໃສ່ເຈັຍກ້ຳແລ້ວຕິດໃສ່ຕາມກິ່ງງ່າຂອງຕົ້ນໄມ້ ວິໄສທັດ.
   - ຂັ້ນຕອນທີ 3: ລຳຕົ້ນ (ກິດຈະກຳບູລິມະສິດ)
     - » ແຕ່ລະກຸ່ມເລືອກ 2 ປະເດັນຈາກກິ່ງກ້ານທີ່ເຫັນວ່າມີຄວາມສຳຄັນທີ່ຕ້ອງໄດ້ປະຕິບັດກ່ອນ
     - » ໃຫ້ຂຽນຂໍ້ຄວາມທີ່ເລືອກຄືນໃໝ່ໃຫ້ສົມບູນແລ້ວເອົາມາຕິດໃສ່ລຳຕົ້ນ.
3. ແລກປ່ຽນ ແລະ ສົນທະນາ:
   - ຜູ້ອຳນວຍຄວາມສະດວກແຕ່ລະກຸ່ມສະຫຼຸບຄືນຜົນໄດ້ຮັບຂອງກຸ່ມແບບເປັນເອກະພາບກັນ
   - ໃຫ້ເລືອກຕົວແທນ 1 ຫຼື 2 ຄົນ ຂຶ້ນມານຳສະເໜີຕາງໜ້າກຸ່ມ
   - ຈາກນັ້ນໃຫ້ແຕ່ລະກຸ່ມເຂົ້າມາລວມໃນກຸ່ມໃຫຍ່ ແລະ ໃຫ້ແຕ່ລະກຸ່ມນຳສະເໜີຜົນຂອງການຄົ້ນຄິດ ແລະ ສົນທະນາຈຸດໃດທີ່ຄ້າຍຄືກັນ, ຈຸດໃດແຕກຕ່າງກັນ ແລະ ປະເດັນໃດທີ່ເປັນບູລິມະສິດ.
4. ການສະແດງຄວາມຂອບໃຈ
   - ຄູຝຶກຂອບໃຈທຸກກຸ່ມທີ່ໄດ້ສະແດງໃຫ້ເຫັນເຖິງຄວາມຮັກ ແລະ ຄວາມເປັນຫ່ວງຕໍ່ກັບທຳມະຊາດຂອງພວກເຮົາ.

ອຸປະກອນ:

- ເຈັຍແຜ່ນໃຫຍ່ທີ່ແຕ້ມຮູບຕົ້ນໄມ້ທີ່ເຫັນເຖິງຮາກ, ລຳຕົ້ນ ແລະ ກິ່ງກ້ານໃບ.




- ເຈັຍບັດຄຳ, ປິກເຟີດ.



ເວລາ: 60 ນາທີ

ໝາຍເຫດ: ໃຫ້ເກັບເຈັຍບັນທຶກຕົ້ນໄມ້ວິໄສທັດນີ້ໄວ້ໃຫ້ດີເພື່ອຈະໄດ້ເອົາໄປໃຊ້ຕໍ່ໃນການສ້າງແຜນດຳເນີນງານ ຫຼື ເຊື່ອມໃສ່ວິໄສທັດຂອງ NBSAP ຕໍ່ໄປ.



ບົດຮຽນທີ 05. ສິດ ແລະ ການມີສ່ວນຮ່ວມຂອງຊຸມຊົນ ແລະ ຊົນເຜົ່າໃນການອະນຸລັກຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ຮັບຮູ້ສິດທິພື້ນຖານຂອງພົນລະເມືອງລາວ ແລະ ເຂົ້າໃຈຄວາມສຳຄັນຂອງການມີສ່ວນຮ່ວມຂອງຊຸມຊົນ ໂດຍສະເພາະກຸ່ມຊົນເຜົ່າໃນວຽກງານການອະນຸລັກຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ.

ເນື້ອໃນ:

- ສິດ ແລະ ໜ້າທີ່ພື້ນຖານຂອງພົນລະເມືອງລາວຕາມລັດຖະທຳມະນູນ ແລະ ກົດໝາຍທີ່ດິນ.
- ການມີສ່ວນຮ່ວມຂອງຊຸມຊົນໃນດ້ານຊີວະນາໆພັນ ແລະ ການອະນຸລັກຊັບພະຍາກອນທຳມະຊາດ

ສິດ ແລະ ໜ້າທີ່ພື້ນຖານຂອງພົນລະເມືອງລາວຕາມລັດຖະທຳມະນູນ ແລະ ກົດໝາຍທີ່ດິນ.

ລັດຖະທຳມະນູນ

ມາດຕາ 19 ວັກ 2: ທຸກອົງການຈັດຕັ້ງ ແລະ ພົນລະເມືອງທຸກຄົນ ຕ້ອງປົກປັກຮັກສາ, ອະນຸລັກຊີວະນາໆພັນ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ຕາມທິດຍືນຍົງ

ມາດຕາ 34 ວັກ 2: ລັດ ຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນສິດທິມະນຸດ ແລະ ສິດທິພື້ນຖານຂອງພົນລະເມືອງຕາມກົດໝາຍ

ມາດມາ 35: ພົນລະເມືອງລາວ ໂດຍບໍ່ຈຳແນກ ຍິງ - ຊາຍ, ຖານະທາງດ້ານສັງຄົມ, ລະດັບການສຶກສາ, ຄວາມເຊື່ອຖື ແລະ ຊົນເຜົ່າ ລ້ວນ ແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ

ມາດຕາ 37: ພົນລະເມືອງລາວ ຍິງ - ຊາຍມີສິດເທົ່າທຽມກັນທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ, ສັງຄົມ ແລະ ຄອບຄົວ

ກົດໝາຍທີ່ດິນ

ມາດຕາ 3 ວັກ 2: ລັດ ມອບສິດນຳໃຊ້ທີ່ດິນໃຫ້ພົນລະເມືອງລາວ, ລວມທັງ ນິຕິບຸກຄົນ, ລວມໝູ່ ແລະ ການຈັດຕັ້ງທີ່ເປັນພົນລະເມືອງລາວ ນຳໃຊ້ຢ່າງຍາວນານ ແລະ ໝັ້ນຄົງ.

ມາດຕາ 4 ຂໍ້ 8: ສິດນຳໃຊ້ທີ່ດິນຂອງບຸກຄົນ ໝາຍເຖິງ ສິດນຳໃຊ້ທີ່ດິນຂອງພົນລະເມືອງລາວ ຊຶ່ງມີໃບຕາດິນຖືກຕ້ອງຕາມກົດໝາຍ

ຕົວຢ່າງ: ວິດີໂອສິດສະເໝີພາບຍິງ-ຊາຍໃນການມີຊື່ໃນໃບຕາດິນ

ເບິ່ງວິດີໂອໄດ້ຕາມລິ້ງນີ້: https://www.youtube.com/watch?v=wDxxBkSvR2o (LIWG, 2023)


ການມີສ່ວນຮ່ວມຂອງຊຸມຊົນໃນການອະນຸລັກຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ

ວິວັດທະນາການການມີສ່ວນຮ່ວມຂອງຊຸມຊົນ: ສະພາບລວມຂອງຄວາມພະຍາຍາມໃນການມີສ່ວນຮ່ວມຂອງຊຸມຊົນທີ່ໄດ້ປະກອບສ່ວນເຂົ້າໃນການອະນຸລັກໃນອະດີດ ແລະ ປັດຈຸບັນ.

- **ລະດັບການມີສ່ວນຮ່ວມຂອງຊຸມຊົນ:** ເລີ່ມຕັ້ງແຕ່ 1)ການມີສ່ວນຮ່ວມແບບທາງອ້ອມ, 2)ການມີສ່ວນຮ່ວມໂດຍການປຶກສາຫາລື, 3)ການມີສ່ວນຮ່ວມເພື່ອສິ່ງຈູງໃຈທາງວັດຖຸ, 4)ການມີສ່ວນຮ່ວມຕາມໜ້າທີ່, 5)ການມີສ່ວນຮ່ວມແບບມີປະຕິສຳພັນ ແລະ 6) ການຂັບເຄື່ອນດ້ວຍຕົວເອງ. [Pretty ແລະ Smith, 2004]

ວິທີການ:

1. ເກມ "ເປັດນ້ອຍ"
   - ຜູ້ເຂົ້າຮ່ວມແຕ່ລະຄົນຢືນຢູ່ເທິງແຜ່ນເຈ້ຍໃຫຍ່ທີ່ເປັນຕົວແທນ "ຜືນດິນ" ໂດຍແຜ່ນໜຶ່ງຍັງຫວ່າງຢູ່ນີ້ແມ່ນຜືນດິນເປົ້າໝາຍທີ່ເປັດພະຍາຍາມຈະຍຶດເອົາ.
   - ເປັດຍ່າງຕາມຈັງຫວະປີກກະຕິໄປຫາຜືນດິນທີ່ຫວ່າງເປົ່າ ຂະນະດຽວກັນ ຜູ້ເຂົ້າຮ່ວມອື່ນໆຍ້າຍ ຫຼື ແລ່ນລະຫວ່າງຜືນດິນຕ່າງໆເພື່ອປ້ອງກັນບໍ່ໃຫ້ເປັດຍຶດບ່ອນທີ່ຫວ່າງເປົ່າໄດ້.
   - ກະຕິກາ:
     » ບໍ່ມີການຕີ, ຍູ້, ຫຼື ກີດຂວາງເປັດ
     » ຄົນໜຶ່ງບໍ່ສາມາດຄອບຄອງສອງຜືນດິນໃນເວລາດຽວກັນໄດ້
     » ການເຄື່ອນໄຫວຕ້ອງໄວ ແຕ່ປອດໄພ.
   - ເປົ້າໝາຍເພື່ອປົກປ້ອງຜືນດິນທີ່ຫວ່າງເປົ່າຈາກເປັດໃຫ້ດິນເທົ່າທີ່ເປັນໄປໄດ້ໃນແຕ່ລະຮອບ.
   - ເກມນີ້ສາມາດຫຼິ້ນຫຼາຍກວ່າ 5 ຮອບ ໃນແຕ່ລະຮອບຈະມີເຄື່ອງຈັບເວລາ ແລະ ເວລາຈະຢຸດເມື່ອເປັດເຂົ້າຍຶດຜືນດິນທີ່ເປົ່າຫວ່າງໄດ້ຢ່າງສຳເລັດຜົນ ແລະ ມີຜູ້ບັນທຶກ ບັນທຶກເວລາ ແລະ ຊື່ຂອງຜູ້ຫຼິ້ນທີ່ເຮັດໃຫ້ເສຍຜືນດິນນັ້ນ.
2. ຄຳຖາມສະທ້ອນຫຼັງຈາກຫຼິ້ນເກມ:
   - ຜູ້ທີ່ເສຍ "ຜືນດິນ" ຂອງເຂົາເຈົ້າຮູ້ສຶກແນວໃດ?
   - ໃຜຍ້າຍຫຼາຍທີ່ສຸດ ແລະ ຍ້ອນຫຍັງ?
   - ມີໃຜທີ່ບໍ່ໄດ້ຍ້າຍບ່ອນເລີຍ ແລະ ຍ້າຍໜ້ອຍທີ່ສຸດ? ເປັນຫຍັງ?
3. ບົດຮຽນທີ່ໄດ້ຈາກເກມນີ້:
   - ພົນລະເມືອງລາວທຸກຄົນມີສິດ ແລະ ໜ້າທີ່ເທົ່າທຽມກັນພາຍໃຕ້ລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍທີ່ດິນ, ລວມທັງສິດນຳໃຊ້ທີ່ດິນ ແລະ ຄວາມຮັບຜິດຊອບໃນການປົກປ້ອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ ໂດຍບໍ່ຄຳນຶງເຖິງເພດ, ສະຖານະພາບ, ຫຼື ຊົນເຜົ່າ.
   - ການມີສ່ວນຮ່ວມຂອງຊຸມຊົນເປັນສິ່ງຈຳເປັນສຳລັບການອະນຸລັກ, ການຂັບເຄື່ອນຈາກພຽງແຕ່ການໄດ້ຮັບຂໍ້ມູນຂ່າວສານເພື່ອປຶກສາຫາລື, ການຕັດສິນໃຈຮ່ວມກັນ ລວມເຖິງ ການເປັນຜູ້ນຳໃນການປົກປ້ອງຊີວະນາໆພັນ ແລະ ຊັບພະຍາກອນທຳມະຊາດ.
4. ການເຊື່ອມໂຍງກັບບົດຮຽນ:
   - ຄູຝຶກນຳພາການສົນທະນາ: "ໃຜຖືວ່າເປັນພົນລະເມືອງລາວ? ສິດທິພື້ນຖານຂອງເຂົາເຈົ້າແມ່ນຫຍັງ?"
   - ນຳສະເໜີ ແລະ ອະທິບາຍສິດ ແລະ ໜ້າທີ່ພື້ນຖານຂອງພົນລະເມືອງລາວ ຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍທີ່ດິນ.
   - ແນະນຳແນວຄວາມຄິດຂອງການມີສ່ວນຮ່ວມຂອງຊຸມຊົນໃນດ້ານຊີວະນາໆພັນ ແລະ ການອະນຸລັກຊັບພະຍາກອນທຳມະຊາດ, ອະທິບາຍເຖິງລະດັບການມີສ່ວນຮ່ວມທີ່ແຕກຕ່າງກັນ.



ອຸປະກອນ:

- ເຈ້ຍແຜ່ນໃຫຍ່ຂຽນ ໜ້າທີ່ພື້ນຖານຂອງພົນລະເມືອງລາວຕາມລັດຖະທຳມະນູນ ແລະ ກົດໝາຍທີ່ດິນ.



- ເຈ້ຍແຜ່ນໃຫຍ່ຂຽນ ລະດັບການມີສ່ວນຮ່ວມຂອງຊຸມຊົນ.




- ເຈ້ຍວິທີການຫຼິ້ນເກມເປັດນ້ອຍ.




- ໂມງຈັບເວລາ.



- ເຈ້ຍເພື່ອບັນທຶກເວລາ ແລະ ຊື່.



- ເຈ້ຍແຜ່ນໃຫຍ່,



- ລະຄັງ.



ເວລາ: 40 ນາທີ

ບົດບາດຂອງຄູຝຶກ:

- ເປັດ: ຄູຝຶກຄົນໜຶ່ງເຮັດໜ້າທີ່ເປັນ "ເປັດ" ທີ່ເຄື່ອນຍ້າຍໄປຫາພື້ນທີ່ຫວ່າງເປົ່າໃນແຕ່ລະຮອບ.
- ໂມງຈັບເວລາ ແລະ ເຈ້ຍບັນທຶກ: ຄູຝຶກຄົນໜຶ່ງໃຊ້ໂມງຈັບເວລາເພື່ອກຳນົດເວລາທີ່ຜູ້ເຂົ້າຮ່ວມສາມາດປົກປ້ອງພື້ນທີ່ຫວ່າງຈາກເປັດແຕ່ລະຮອບ ແລະ ບັນທຶກເວລາແຕ່ລະຮອບ ແລະ ບັນທຶກຊື່ຂອງຜູ້ເຂົ້າຮ່ວມທີ່ເຄື່ອນໄຫວ (ຫຼືບໍ່ເຄື່ອນໄຫວ) ທີ່ຖືກເປັດຍາດເອົາພື້ນທີ່ໄດ້.
- ຜູ້ອຳນວຍຄວາມສະດວກ: ນຳພາເກມໂດຍການອະທິບາຍກົດລະບຽບ, ຊີ້ນຳການຫຼິ້ນ, ເລີ່ມ ແລະ ຢຸດຮອບ ແລະ ບອກການລະເມີດກົດລະບຽບ(ຄວາມຜິດ)ທີ່ເກີດຂຶ້ນ.

ບົດຮຽນທີ 06. ການປຶກສາຫາລືຂອງຊຸມຊົນ ແລະ ຊົນເຜົ່າຕໍ່ກັບການປະກອບສ່ວນໃນວຽກງານຊີວະນາໆພັນຂອງທ້ອງຖິ່ນ ແລະ ແຫ່ງຊາດ

ຈຸດປະສົງ:

ເພື່ອເປັນການລະດົມການມີສ່ວນຮ່ວມຂອງຊຸມຊົນ ແລະ ຊົນເຜົ່າໃນການປະກອບສ່ວນໃນວຽກງານຊີວະນາໆພັນ, ໂດຍສະເພາະແມ່ນເປັນການປະກອບຂໍ້ມູນໃນການສະເໜີແນະຕໍ່ການປັບປຸງ ຍຸດທະສາດຊີວະນາໆພັນແຫ່ງຊາດ.

ເນື້ອໃນ:


- ທົບທວນ ແລະ ພັດທະນາ ວິໄສທັດ (ຕົ້ນໄມ້ວິໄສທັດ) ຂອງຊຸມຊົນຕໍ່ກັບວຽກງານຊີວະນາໆພັນ.
- ເປົ້າໝາຍການມີສ່ວນຮ່ວມຂອງຊຸມຊົນ ແລະ ກຸ່ມຊົນເຜົ່າຕ່າງໆຕໍ່ກັບການອະນຸລັກຊີວະນາໆພັນໃນທ້ອງຖິ່ນ.
- ພັດທະນາແຜນດຳເນີນງານຊີວະນາໆພັນຂອງຊຸມຊົນ ແລະ ກຸ່ມຊົນເຜົ່າ ໂດຍອີງໃສ ວິໄສທັດ ແລະ ບູລິມະສິດທີ່ໄດ້ວາງໄວ້ຂອງພວກເຂົາ.

ວິທີການ:

1. ສືບຕໍ່ 4 ກຸ່ມຄົ້ນຄວ້າຕົ້ນໄມ້ວິໄສທັດ
2. ໂດຍໃຫ້ແຕ່ລະກຸ່ມທວນຄືນ 2 ບູລິມະສິດຈາກລຳຕົ້ນ ແລ້ວໃຫ້ອະທິບາຍເຫດຜົນຍ້ອນຫຍັງຈຶ່ງເລືອກ 2 ຫົວຂໍ້ນີ້.
3. ຫຼັງຈາກນັ້ນ ຜູ້ອຳນວຍຄວາມສະດວກໃນກຸ່ມນຳພາຄົ້ນຄວ້າ ແຜນຈັດຕັ້ງປະຕິບັດວ່າກຸ່ມເຮົາ ຈະເຮັດຫຍັງແດ່ເພື່ອໃຫ້ເປົ້າໝາຍ ແລະ ວິໄສທັດນີ້ໄດ້ເກີດຜົນເປັນຈິງ (ນຳໃຊ້ຕາຕະລາງແຜນປະຕິບັດງານ).
4. ຫຼັງຈາກແຕ່ລະກຸ່ມສຳເລັດການກຳນົດແຜນປະຕິບັດງານແລ້ວໃຫ້ແຕ່ລະກຸ່ມສົ່ງຕົວແທນມານຳສະເໜີແຜນປະຕິບັດຂອງກຸ່ມຕົວເອງ.
5. ໃນຂະນະທີ່ແຕ່ລະກຸ່ມຄົ້ນຄວ້າ, ທີມງານຝຶກຈະໄດ້ສະຫຼຸບວິໄສທັດ ແລະ ເປົ້າໝາຍຈາກທັງ 4 ກຸ່ມເປັນສະບັບລວມ, ຈາກນັ້ນສະເໜີໃຫ້ຜູ້ເຂົ້າຮ່ວມທັງໝົດໃນຕອນທ້າຍ.

ອຸປະກອນ:

- ເຈ້ຍຂໍ້ມູນຕົ້ນໄມ້ວິໄສທັດ.



- ຕົວຢ່າງ ຕາຕະລາງຄົ້ນຄວ້າແຜນປະຕິບັດງານ.




- ເຈ້ຍແຜ່ນໃຫຍ່, ເຟີດ, ເຈ້ຍບັດຄຳ.



ເວລາ: 120 ນາທີ

ໝາຍເຫດ: ໃນຂະນະທີ່ຜູ້ເຂົ້າຮ່ວມ ເຮັດວຽກກ່ຽວກັບແຜນການປະຕິບັດງານຂອງພວກເຂົາ, ທີມງານຝຶກອົບຮົມຈະຮວບຮວມວິໄສທັດ ແລະ ເປົ້າໝາຍຈາກທັງ 4 ກຸ່ມເຂົ້າໄປໃນບົດສະຫຼຸບດຽວ. ຈາກນັ້ນບົດສະຫຼຸບລວມນີ້ຈະຖືກນຳສະເໜີຕໍ່ກຸ່ມໃຫຍ່ກ່ວາໃນຕອນສະຫຼຸບຂອງກອງປະຊຸມ.



ບົດຮຽນທີ 07. ປະເມີນການຮັບຮູ້ຕໍ່ກັບບົດຮຽນຂອງການຝຶກອົບຮົມ (ຫຼັງການຝຶກ)

ຈຸດປະສົງ:

ໃຫ້ຜູ້ເຂົ້າຮ່ວມໄດ້ປະເມີນການຮັບຮູ້ຂອງຕົວເອງຕໍ່ກັບບົດຮຽນຫຼັງການຝຶກອົບຮົມ.

ເນື້ອໃນ:

- ການປະເມີນຄວາມຮູ້ ແລະ ຄວາມເຂົ້າໃຈຂອງຕົວເອງຕໍ່ກັບບົດຮຽນຂອງການຝຶກ.

ຜູ້ເຂົ້າຮ່ວມຈະໄດ້ປະເມີນຄວາມຮູ້ ແລະ ຄວາມເຂົ້າໃຈຂອງຕົວເອງຕໍ່ກັບບົດຮຽນຂອງການຝຶກ

1. ຄວາມເຂົ້າໃຈຕໍ່ກັບ ສົນທິສັນຍາຊີວະນາໆພັນ, ກອບວຽກສາກົນຊີວະນາໆພັນ ແລະ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ
2. ສິດທິພື້ນຖານຂອງພົນລະເມືອງລາວຕໍ່ກັບຄວາມສະເໝີພາບຍິງ-ຊາຍ, ກຳມະສິດໃນທີ່ດິນ ແລະ ບົດບາດໃນການອະນຸລັກຊີວະນາໆພັນ
3. ຈິດສຳນຶກດ້ານພູມປັນຍາທ້ອງຖິ່ນອັນເປັນມູນເຊື້ອ ແລະ ວັດທະນາທຳທ້ອງຖິ່ນຂອງຊຸມຊົນ ແລະ ຊົນເຜົ່າ.
4. ການປະຕິບັດຕົວຈິງ ແລະ ຄວາມເປັນໄປໄດ້ຂອງແຜນປະຕິບັດງານທີ່ສ້າງຂຶ້ນໃນກິດຈະກຳ ຕົ້ນໄມ້ວິໄສທັດສຳລັບຊຸມຊົນຂອງເຂົາເຈົ້າ
5. ຄວາມກ່ຽວຂ້ອງ ແລະ ຜົນປະໂຫຍດຂອງການຝຶກອົບຮົມໃນການສະໜັບສະໜູນການອະນຸລັກຊີວະນາໆພັນໃນພື້ນທີ່ຂອງເຂົາເຈົ້າ
6. ຄວາມຮູ້ສຶກຂອງການມີສ່ວນຮ່ວມຂອງຊຸມຊົນ ແລະ ຊົນເຜົ່າຕໍ່ກັບ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ.
7. ແຜນປະຕິບັດງານຂອງຊຸມຊົນ.

ວິທີການ:


- ຄູຝຶກແຈກຢາຍແບບສອບຖາມ ແລະ ອະທິບາຍວິທີປະເມີນຜົນ.
- ຜູ້ເຂົ້າຮ່ວມຕື່ມຂໍ້ມູນສ່ວນຕົວຂອງເຂົາເຈົ້າ.
- ຄູຝຶກສະແດງແຕ່ລະຄຳຖາມເທິງຈໍ LCD ຫຼື ໂປເຈັກເຕີ, ໃຫ້ເວລາຜູ້ເຂົ້າຮ່ວມຄິດຢ່າງລະອຽດ ແລະ ຖາມຄູຝຶກໃຫ້ມີຄວາມກະຈ່າງແຈ້ງກ່ອນຕອບຄຳຖາມແຕ່ລະຄຳຖາມ.
- ຂະບວນການນີ້ດຳເນີນຕໍ່ໄປຈົນກວ່າທຸກຄຳຖາມຈະຖືກຕອບສຳເລັດ.

ອຸປະກອນ:

- ເອກະສານຊ້ອນທ້າຍ 16: ແບບຟອມປະເມີນຫຼັງການຝຶກ.



- ເຄື່ອງສາຍ LCD.



ເວລາ: 30 ນາທີ

ເອກະສານຊ້ອມທ້າຍ 01:

ໂພສເຕີ ນິຍາມ ແລະ ປັດໄຈສ່ຽງຂອງຊີວະນາໆພັນ.

ນິຍາມ ແລະ ປັດໄຈສ່ຽງຂອງຊີວະນາໆພັນ

ຊີວະນາໆພັນ

ຊີວະນາໆພັນໝາຍເຖິງຄວາມຫຼາກຫຼາຍຂອງຊະນິດພັນຂອງສິ່ງທີ່ມີຊີວິດເຊັ່ນ:ພືດ ,ສັດ,ສິ່ງທີ່ມີຊີວິດອື່ນໆລວມທັງບັນດາລະບົບນິເວດທີ່ກ່ຽວຂ້ອງເປັນຕົ້ນເຊັ່ນ ປ່າໄມ້,ທົ່ງຫຍ້າ,ໜອງນ້ຳ,ແມ່ນ້ຳແລະມະຫາສະໝຸດ.ມະນຸດກໍ່ແມ່ນສ່ວນໜຶ່ງ ທີ່ນອນໃນສາຍກ່ຽວພັນດັ່ງກ່າວຊຶ່ງບໍ່ສາມາດຕັດແຍກອອກຈາກກັນໄດ້,ປັດຈຸບັນ ມີ 1,8 ລ້ານສາຍພັນ(ຄົນ ແລະສັດ)ທີ່ໄດ້ຮັບການຂຶ້ນທະບຽນໃນທົ່ວໂລກ.



ຊີວະນາໆພັນ ກຳລັງຖືກຄຸກຄາມ

ໃນເວລາພຽງ30ປີເທົ່ານັ້ນປະລິມານຂອງປະຊາກອນແລະຊະນິດພັນພືດສັດ ຫຼຸດລົງແບບເຄິ່ງໜຶ່ງເຊິ່ງຄາດຄະເນປະມານ 26,000 ຊະນິດຈະສູນພັນໃນທຸກ ໆປີທົ່ວໂລກ. ການສູນເສຍຊີວະນາໆພັນໃນ ສປປ ລາວ ແມ່ນມີທ່າອ່ຽງນັບມື້ ນັບເພີ່ມຂຶ້ນຍ້ອນການລ່າແບບຊະຊາຍ,ການບຸກເບີກພື້ນທີ່ປ່າໄມ້,ທຳລາຍຖິ່ນ ທີ່ຢູ່ອາໄສ, ທຳລາຍແຫຼ່ງຊັບພະຍາກອນທຳມະຊາດ.



german cooperation DEUTSCHE ZUSAMMENARBEIT

Co-funded by Norway

Implemented by giz

As part of NBSAP accelerator partnership

Produced by RDA

ເອກະສານຊ້ອນທ້າຍ 02:

ຊຸດເກມ ການຂຶ້ນຂອງ CBD.



ເອກະສານຊ້ອມທ້າຍ 03:

ໂພສເຕີ ການເກີດຂຶ້ນຂອງ CBD ໃນສາກົນ.



ເອກະສານຊ້ອນທ້າຍ 04:

ໂພສເຕີ ການເກີດຂຶ້ນຂອງ CBD ໃນລາວ.




ເອກະສານຊ້ອນທ້າຍ 05:

ໂພສເຕີຂໍ້ມູນທົ່ວໄປຂອງ ສົນທິສັນຍາຊີວະນາໆພັນ CBD.



ເອກະສານຊ້ອນທ້າຍ 06:

ໂພສເຕີ ກົນໄກການເຮັດວຽກຂອງ CBD ໃນສາກົນ.



ເອກະສານຊ້ອນທ້າຍ 07:

ໂພສເຕີ ກົນໄກການປະສານງານ ຂອງບັນດາສົນທິສັນຍາທີ່ກ່ຽວພັນກັບ CBD



ເອກະສານຊ້ອນທ້າຍ 08:

ໂພສເຕີ ກອບວຽກຊີວະນາໆພັນສາກົນ



ເອກະສານຊ້ອນທ້າຍ 09:

ເຈັຍບັດຄຳ ພິມແຕ່ລະຂໍ້ຂອງ 23 ເປົ້າໝາຍກອບວຽກຊີວະນາໆພັນສາກົນ ຄຸນມິງ-ມອນເທວ.

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

Target 1: **By 2030, Lao PDR will have an integrated biodiversity-inclusive spatial plan, with effective management to address land use changes, in particular to focus on reducing the loss of areas of high biodiversity importance, rare ecosystems, and other ecosystems with high ecological integrity, while respecting the rights of local communities and indigenous people.**
ໃນປີ 2030, ສປປ ລາວ ຈະມີແຜນຄຸ້ມຄອງຊີວະນາໆພັນແບບລວມສຸມຮອບດ້ານ ເຊິ່ງຈະປະກອບດ້ວຍແຜນຄຸ້ມຄອງ ທີ່ດິນທີ່ມີປະສິດທິພາບ ໂດຍແນ່ໃສ່ ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນ ດ້ານຊີວະນາໆພັນ ແລະ ລະບົບນິເວດວິທະຍາ, ພ້ອມທັງເຄົາລົບສິດ ຂອງຊຸມຊົນ ແລະ ປະຊາຊົນປະຈຳທ້ອງຖິ່ນ

ເອກະສານຊ້ອນທ້າຍ 10:

ໂພສເຕີ ຂໍ້ມູນທົ່ວໄປຂອງ NBSAPs ໃນ ສປປ ລາວ.



ເອກະສານຊ້ອນທ້າຍ 11:

5 ຂໍ້ສຳຄັນຂອງຍຸດທະສາດ ແລະ ແຜນດຳເນີນງານ 2016-2025



ເອກະສານຊ້ອມທ້າຍ 12:

ຂໍ້ແນະນຳຂະບວນການ World Cafe



ເອກະສານຊ້ອນທ້າຍ 13:

ພິມເຈ້ຍ A4 ຮ່າງເປົ້າໝາຍດ້ານຊີວະນາໆພັນ 2030 ຂອງ ສປປ ລາວ

ສະບັບຮ່າງ: ເປົ້າໝາຍແຫ່ງຊາດດ້ານຊີວະນາໆພັນ ຮອດປີ 2030 ຂອງ ສປປ ລາວ ເພື່ອປະກອບເຂົ້າໃນ NBSAPs

ເປົ້າໝາຍ 1 (ການວາງແຜນພື້ນທີ່ເພື່ອຫຼຸດຜ່ອນການສູນເສຍຊີວະນາໆພັນ)

ຮອດປີ 2030, ສປປ ລາວ ຈະມີແຜນຜັງທາງດ້ານຊີວະນາໆພັນແບບປະສົມປະສານ, ມີການຄຸ້ມຄອງຢ່າງມີປະສິດທິຜົນ ເພື່ອແກ້ໄຂການປ່ຽນແປງການນຳໃຊ້ທີ່ດິນ, ໂດຍສະເພາະ ແມ່ນການສຸມໃສ່ການຫຼຸດຜ່ອນການສູນເສຍພື້ນທີ່ ທີ່ມີຄວາມສຳຄັນທາງດ້ານຊີວະນາໆພັນສູງ, ລະບົບນິເວດທີ່ຫາຍາກ ແລະ ລະບົບນິເວດອື່ນໆທີ່ມີຄວາມສົມບູນທາງດ້ານນິເວດວິທະຍາສູງ, ພ້ອມທັງເຄົາລົບສິດຂອງຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າ.

ເປົ້າໝາຍ 2 (ຟື້ນຟູ ພື້ນທີ່ເສື່ອມໂຊມ ໃຫ້ໄດ້ 30%)

ຮອດປີ 2030 ຈະໄດ້ຮັບການສ້າງແຜນທີ່ ພື້ນທີ່ເສື່ອມໂຊມຂອງປ່າໄມ້, ເນື້ອທີ່ດິນກະສິກຳ, ນ້ຳໃນດິນ ແລະ ຫຼາຍກວ່າ 20% ຈະໄດ້ຮັບການຟື້ນຟູຄືນໃໝ່ເພື່ອປັບປຸງຊີວະນາໆພັນ, ມີການເຊື່ອມຕໍ່ ແລະ ຄວາມສົມບູນຂອງລະບົບນິເວດ.

ເປົ້າໝາຍ 3 (ອະນຸລັກ ທີ່ດິນ, ນ້ຳ ແລະ ທະເລ ໃຫ້ໄດ້ 30%)

ຮອດປີ 2030, ຢ່າງໜ້ອຍ 30%% ຂອງພື້ນທີ່ລະບົບນິເວດດິນ ແລະ ນ້ຳໃນດິນ, ໂດຍສະເພາະ ເຂດທີ່ມີຄວາມສຳຄັນທາງດ້ານຊີວະນາໆພັນ ແລະ ການບໍລິການຂອງລະບົບນິເວດ, ຈະຕ້ອງໄດ້ຮັບການກຳນົດ, ອະນຸລັກຢ່າງມີປະສິດທິຜົນ ແລະ ຄຸ້ມຄອງຜ່ານລະບົບຕົວແທນດ້ານນິເວດວິທະຍາ, ເຊື່ອມໂຍງເຂົ້າກັນຢ່າງດີ ແລະ ມີລະບົບຄຸ້ມຄອງປ່າສະຫງວນ ຢ່າງເທົ່າທຽມກັນ ແລະ ມີມາດຕະການອະນຸລັກຕາມພື້ນທີ່ ທີ່ມີປະສິດທິຜົນອື່ນໆ, ໃນຂະນະທີ່ຮັບປະກັນວ່າການນຳໃຊ້ໃຫ້ເກີດປະໂຫຍດຢ່າງຍືນຍົງນັ້ນ ສອດຄ່ອງກັບຜົນໄດ້ຮັບຂອງການອະນຸລັກຢ່າງເຕັມສ່ວນ ໂດຍຮັບຮູ້ ແລະ ເຄົາລົບສິດຂອງຊຸມຊົນທ້ອງຖິ່ນ.

ເປົ້າໝາຍ 4 (ຢຸດຢັ້ງການສູນພັນຂອງຊະນິດພັນ, ປົກປ້ອງຄວາມຫຼາກຫຼາຍທາງພັນທຸກຳ ແລະ ແກ້ໄຂຂໍ້ຂັດແຍ່ງຂອງມະນຸດ-ສັດປ່າ)

ຮອດປີ 2030, ບັນຊີແດງແຫ່ງຊາດ ແລະ ຂະບວນການກຳນົດຊະນິດພັນທີ່ຖືກຄຸກຄາມຈະສຳເລັດ; ຈະສຳເລັດແຜນການຟື້ນຟູສຳລັບຊະນິດພັນທີ່ເປັນບຸລິມະສິດທີ່ລະບຸໄວ້ວ່າ ເປັນສັດປ່າທີ່ໃກ້ຈະສູນພັນ ຫຼື ໃກ້ຈະສູນພັນທີ່ສຸດ; ຈະມີຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບຄວາມຂັດແຍ່ງລະຫວ່າງມະນຸດ-ສັດປ່າ ແລະ ຄວາມຂັດແຍ່ງເຫຼົ່ານີ້ຈະຫຼຸດລົງ 50%.

ເປົ້າໝາຍ 5 ແລະ 9 ຮວມເຂົ້າກັນ (ຮັບປະກັນການລ່າ, ນຳໃຊ້ ແລະ ການຄ້າສັດປ່າ ແບບຍືນຍົງ, ປອດໄພ ແລະ ຖືກກົດໝາຍ)

ຮອດປີ 2030, ກົດໝາຍ, ລະບຽບການ, ການຕິດຕາມສັດປ່າ ແລະ ຜືດປ່າຕ່າງໆ ຈະໄດ້ຮັບການຈັດຕັ້ງປະຕິບັດຢ່າງພຽງພໍ ເພື່ອຮັບປະກັນ ການຊົມໃຊ້ແບບຍືນຍົງ ດ້ວຍການວາງແຜນການ ຄຸ້ມຄອງຢ່າງມີປະສິດທິຜົນ, ໂດຍສະເພາະທາງດ້ານການຄ້າ ໂດຍຜ່ານການປຶກສາຫາລືກັບຊຸມຊົນທ້ອງຖິ່ນ ແລະ ຊົນເຜົ່າ.

ເປົ້າໝາຍ 6 (ຫຼຸດຜ່ອນການນຳເຂົ້າ ແລະ ໄພຄຸກຄາມຂອງສາຍພັນຕ່າງຖິ່ນ ລົງ 50%)

ຮອດປີ 2030, ພັນພືດ ແລະ ສັດປ່າຕ່າງຖິ່ນໃນ ສປປ ລາວ ຈະຖືກປະເມີນໂດຍຜ່ານການສຳຫຼວດ, ມີແຜນທີ່ການແຜ່ຂະຫຍາຍພັນ, ປະເມີນຜົນກະທົບ ແລະ ຄຸ້ມຄອງເພື່ອຫຼຸດຜ່ອນໄພຄຸກຄາມຕໍ່ຊະນິດພັນພື້ນເມືອງ ແລະ ລະບົບນິເວດພື້ນເມືອງ ແລະ ຈະມີການຄວບຄຸມ ເສັ້ນທາງທີ່ຮູ້ຈັກແຜ່ຫຼ່ງທີ່ມາ ເພື່ອຫຼຸດຜ່ອນໄພຄຸກຄາມຕໍ່ຊະນິດພັນພື້ນເມືອງ ແລະ ລະບົບນິເວດທຳມະຊາດ.

ເປົ້າໝາຍ 7 (ຫຼຸດຜ່ອນມົນລະພິດໃນລະດັບທີ່ບໍ່ເປັນອັນຕະລາຍຕໍ່ຊີວະນາໆພັນ)

1

ເອກະສານຊ້ອນທ້າຍ 14:

ຕົວຢ່າງຕາຕະລາງຄົ້ນຄວ້າແຜນດຳເນີນງານ

ກອບວຽກຊີວະນາໆພັນ KM GBF

ເປົ້າໝາຍ 23 ຮັບປະກັນຄວາມສະເໝີພາບລະຫວ່າງຍິງ-ຊາຍ ໃນການຈັດຕັ້ງປະຕິບັດກອບວຽກ ໂດຍຜ່ານວິທີການຕອບສະໜອງ ບົດບາດ ຍິງ-ຊາຍ ໂດຍສະເພາະ ແມ່ຍິງ ແລະ ເດັກຍິງທຸກຄົນໄດ້ຮັບໂອກາດ ແລະ ຄວາມສາມາດເທົ່າທຽມກັນ ເພື່ອປະກອບສ່ວນ ເຂົ້າໃນ 3 ຈຸດປະສົງຂອງສົນທິສັນຍາ, ລວມທັງການຮັບຮູ້ສິດສະເໝີພາບ ແລະ ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນ ທຳມະຊາດ ແລະ ການມີສ່ວນຮ່ວມທີ່ສະເໝີພາບ ແລະ ມີຄວາມໝາຍຂອງພວກເຂົາ ແລະ ນຳພາໃນທຸກລະດັບຂອງການປະ ຕິບັດ, ການມີ ສ່ວນຮ່ວມ, ນະໂຍບາຍ ແລະ ການຕັດສິນໃຈທີ່ກ່ຽວຂ້ອງກັບຊີວະນາໆພັນ.

ACTION PLAN

ແຜນປະຕິບັດ	ພາກສ່ວນປະຕິບັດ	ກອບເວລາ	ຕົວຊີ້ວັດ

ເອກະສານຊ້ອນທ້າຍ 15:

ແບບສອບຖາມອອນລາຍຂອງກຸ່ມໄວໜຸ່ມ.

ແບບສອບຖາມອອນລາຍ:
ການສຳຫຼວດຂໍ້ມູນຄວາມເຂົ້າໃຈຂອງກຸ່ມໄວໜຸ່ມຕໍ່ກັບວຽກງານຊີວະນາໆພັນຂອງລາວ ແບບອອນລາຍ

ປະເທດລາວເປັນທີ່ຕັ້ງຂອງທຳມະຊາດທີ່ມະຫັດສະຈັນ ທີ່ມີ ປ່າໄມ້, ແມ່ນ້ຳ, ສັດ, ແລະ ພືດພັນທີ່ມີຄວາມສຳຄັນຕໍ່ຊີວິດ, ສຸຂະພາບ ແລະ ອະນາຄົດຂອງພວກເຮົາ.

ປະຈຸບັນ ລັດຖະບານລາວ ກຳລັງປັບປຸງຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດດ້ານຊີວະນາໆພັນ (NBSAP) ເປັນ ແຜນການແຫ່ງຊາດທີ່ສະແດງໃຫ້ເຫັນວ່າພວກເຮົາຈະປົກປັກຮັກສາທຳມະຊາດ, ນຳໃຊ້ຊັບພະຍາກອນທຳມະຊາດຢ່າງຍືນຍົງ, ແລະ ແບ່ງປັນຜົນປະໂຫຍດຢ່າງຍຸດຕິທຳ. ທ່ານສາມາດອ່ານເອກະສານສະບັບນີ້ໄດ້ທີ ລິ້ງນີ້

ເປັນຫຍັງສຽງຂອງເຈົ້າຈຶ່ງສຳຄັນ:
ຊາວໜຸ່ມແມ່ນກຸນແຈສຳຄັນໃນການປົກປັກຮັກສາສິ່ງແວດລ້ອມ, ແນວຄວາມຄິດ ແລະ ຄວາມກັງວົນຂອງເຈົ້າ ຈະຊ່ວຍສະໜັບສະໜູນແຜນງານນີ້ ແລະ ຮັບປະກັນຜົນປະໂຫຍດທີ່ຈະເກີດຂຶ້ນກັບຊຸມຊົນຂອງເຈົ້າ.

ການສຳຫຼວດສັ້ນນີ້ (ພຽງແຕ່ 5-10 ນາທີ) ຈະຖາມຄວາມຄິດຂອງທ່ານກ່ຽວກັບຊີວະນາໆພັນ:

I. **ຂໍ້ມູນທົ່ວໄປ / General information**
   a. **ກະລຸນາເລືອກແຂວງທີ່ທ່ານຢູ່ / Province**
   b. **ເພດ / gender**
   c. **ອາຍຸ / age**
   d. **ສະຖານະພາບ / status**
   e. **ລະດັບການສຶກສາ / education**
   f. **ຊົນເຜົ່າ / ethnicity**

II. **ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ / awareness and understanding**

1. ເຈົ້າເຄີຍຮູ້ຈັກຄຳວ່າ “ຊີວະນາໆພັນ” ມາກ່ອນບໍ່? / Have you heard the word "biodiversity" before?
   - ☐ ຮູ້ / Yes
   - ☐ ບໍ່ຮູ້ / No
   - ☐ ບໍ່ແນ່ໃຈ / Not sure
2. ຊີວະນາໆພັນ ສຳລັບເຈົ້າໝາຍເຖິງຫຍັງ? / What does “biodiversity” mean to you? *(Open-ended)*

ເອກະສານຊ້ອມທ້າຍ 16:

ແບບຟອມປະເມີນຫຼັງການຝຶກ.

<u>ແບບຟອມປະເມີນຕົນເອງຕໍ່ກັບການອົບຮົມ</u>

ສົນທິສັນຍາວ່າດ້ວຍຊີວະນາໆພັນ ແລະ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ

ສຳລັບຊຸມຊົນ ແລະ ກຸ່ມຊົນເຜົ່າ

ຄຳແນະນຳວິທີການໃຫ້ຄະແນນໃນການຕອບແບບສອບຖາມ

ການໃຫ້ຄະແນນຕ່ຳສຸດແມ່ນ 1 ຫາ ສູງສຸດແມ່ນ 5 ໂດຍມີເນື້ອໃນລະອຽດຄື:

ຄຳອະທິບາຍ	ຄະແນນ
ທ່ານມີຄວາມໝັ້ນໃຈທີ່ສຸດ ຫຼື ເຫັນດີທີ່ສຸດ (ສູງສຸດ)	5
ທ່ານມີຄວາມໝັ້ນໃຈ ຫຼື ເຫັນດີ (ສູງ)	4
ທ່ານບໍ່ໝັ້ນໃຈ ຫຼື ຂ້ອນຂ້າງເຫັນດີ (ປານກາງ)	3
ທ່ານບໍ່ໝັ້ນໃຈ ຫຼື ບໍ່ເຫັນດີ (ຕ່ຳ)	2
ທ່ານບໍ່ເຄີຍຮູ້ຈັກ ຫລື ບໍ່ເຫັນດີທີ່ສຸດ (ຕ່ຳສຸດ)	1

ໃນການໃຫ້ຄະແນນແມ່ນໃຫ້ທ່ານໝາຍ ✓ ໃສ່ຫ້ອງຄະແນນທີ່ທ່ານຄິດວ່າຖືກກັບໂຕທ່ານເອງຫລາຍທີ່ສຸດ

ພາກທີ 1. ຂໍ້ມູນສ່ວນຕົວ

ຊື່ ແລະ ນາມສະກຸນ:.....ອາຍຸ.....ປີ, ຊົນເຜົ່າ:.....

ໜ້າທີ່ຮັບຜິດຊອບ.....ມາຈາກບ້ານ.....

ພາກທີ 2. ຜ່ານການຝຶກອົບຮົມແລ້ວ

ລ.ດ	ຫົວຂໍ້	ຄະແນນ				
		1	2	3	4	5
1	ຂ້ອຍຮັບຮູ້ກ່ຽວກັບສົນທິສັນຍາຊີວະນາໆພັນສາກົນ					
2	ຂ້ອຍຮັບຮູ້ກອບວຽກຊີວະນາໆພັນສາກົນ					
3	ຂ້ອຍຮັບຮູ້ ຍຸດທະສາດ ແລະ ແຜນດຳເນີນງານຊີວະນາໆພັນແຫ່ງຊາດ					
4	ຂ້ອຍຮັບຮູ້ ສິດທິຂອງຕົວເອງໃນການເປັນພົນລະເມືອງລາວ					
5	ຂ້ອຍຮັບຮູ້ ການວາງສ້າງວິໄສທັດຊີວະນາໆພັນ ແມ່ນຕ້ອງມີສ່ວນຮ່ວມຂອງຊຸມຊົນ					
6	ຂ້ອຍຮູ້ຈັກ ພູມປັນຍາທ້ອງຖິ່ນ/ຮີດຄອງຂອງຊຸມຊົນແລະຊົນເຜົ່າຂອງຂ້ອຍເປັນຢ່າງດີ					
7	ແຜນໃນຕົ້ນໄມ້ວິໄສທັດແມ່ນສາມາດປະຕິບັດຕົວຈິງໄດ້ໂດຍຊຸມຊົນ					
8	ການຝຶກຄັ້ງນີ້ແມ່ນ ເໝາະສົມຕ່ອງໜ້າທີ່ວຽກງານອະນຸລັກຊີວະນາໆພັນຂອງບ້ານຂ້ອຍ					
9	ການຝຶກຄັ້ງນີ້ ຂ້ອຍໄດ້ມີສ່ວນຮ່ວມໃນການສະເໜີຄວາມຄິດເຂົ້າໃນ ຍຸດທະສາດຊີວະນາໆພັນ ຂອງຊຸມຊົນ ແລະ ຂອງຊາດ					

ຫົວຂໍ້ໃດໃນການຝຶກອົບຮົມຄັ້ງນີ້ທີ່ທ່ານຄິດວ່າສຳຄັນຕໍ່ທ່ານທີ່ສຸດ:

.....

.....

ຄຳຄິດເຫັນອື່ນໆ ຫຼື ຂໍ້ສະເໜີຕໍ່ການຈັດຝຶກອົບຮົມຄັ້ງນີ້:

.....

.....

Post Test Form (Community NBSAP) p1

QR Code ເພື່ອເຂົ້າເຖິງເອກະສານອ້າງອີງທັງໝົດ



ເອກກະສານອ້າງອີງ

1. Ministry of Natural Resources and the Environment (MoNRE), 2016. National Biodiversity Strategy and Action Plan for Lao PDR 2016-2025. Vientiane Lao PDR.

2. Deutsche Gesellschaft for Internationale Zusammenarbeit (GIZ) GmbH Sector Programme "Conservation of Biodiversity on Land", 2021. Conceptual Guideline online Trainings on Nature-based Solutions.

3. Sakiyama, M., Schwarzer, C. (2018): CBD in a Nutshell (2nd edition. Global Youth Biodiversity Network, Berlin, Germany, 204 pages.

4. Convention on Biological Diversity (CBD): Kunming-Montreal Global Biodiversity Framework 2030 targets.

5. Department of Environment, Ministry of Natural Resources and the Environment (MoNRE), 2022: Environmental Education and Awareness Toolkit.

6. Jules pretty and David smith (2004). Social Capital in Biodiversity Conservationand Management.